# ສົນທິສັນຍາກົງສຸນ

ລະຫວ່າງ

ສາທາລະນະລັດ ປະຊາຊົນຈີນ

ແລະ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

************

ສາທາລະນະລັດ ປະຊາຊົນ ຈີນ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ດ້ວຍຄວາມປາຖະໜາຢາກ ເສີມຂະຫຍາຍການຮ່ວມມື ແບບມິດຕະພາບ ແລະ ການພົວພັນຖານບ້ານໄກ້ເຮືອນຄຽງ ທີ່ປອງດອງກັນ ລະຫວ່າງ ໒ ປະເທດ, ເພື່ອເພີ່ມທະວີການພົວພັນດ້ານກົງສຸນ ລະຫວ່າງ ໒ ປະເທດ ແລະ ເພື່ອປົກປັກຮັກສາ ສິດ ແລະ ຜົນປະໂຫຍດທັງ ໒ ຊາດ ກໍ່ຄືພົນລະ ເມືອງທັງ ໒ ຊາດ. ຈິ່ງເຫັນດີ ເຫັນພ້ອມກັນເຊັນສົນທິສັນຍາສະບັບນີ້ ແລະ ໄດ້ຕົກລົງ ບັນດາມາດຕາດັ່ງລຸ່ມນີ້ :

## <u>ພາກທີໜຶ່ງ</u>

## ວ່າດ້ວຍ ນິຍາມສັບ

### <u>ມາດຕາ 1</u>

### ວ່າດ້ວຍຍິຍາມສັບ

ເພື່ອຄວາມເຂົ້າໃຈ ໃນຂໍ້ຕົກລົງ ສະບັບນີ້ສັບຕ່າງໆ ທີ່ໃຊ້ຍອມມີຄວາມໝາຍ ດັ່ງທີ່ແຈ້ງຕໍ່ລົງໄປນີ້ :

ກ. "ສຳນັກງານກົງສຸນ" ໝາຍເຖິງສະຖານກົງສຸນໃຫຍ່, ສະຖານກົງສຸນ, ຮອງກົງສຸນ ແລະສຳນັກງານ ຕົວແທນກົງສຸນ;

ຂ. " ເຂດກົງສຸນ " ໝາຍເຖິງອານາເຂດ ທີ່ສຳນັກງານກົງສູນໄດ້ຮັບອະນຸຍາດ ໃຫ້ປະຕິບັດໜ້າທີ່ການກົງສຸນ;

ຄ. "ຫົວຫນ້າສໍານັກງານກົງສຸນ" ຫມາຍເຖິງຫົວໜ້າກົງສຸນໃຫຍ່ ກົງສຸນ, ຮອງກົງສູນຫລືຕົວແທນກົງສຸນ ທີ່ຖືກມອບຫມາຍ ຈາກລັດທີ່ສົ່ງເພື່ອນໍາພາ ສໍານັກງານກົງສຸນ;

ງ. "ລັດຖະກອນກົງສຸນ" ຫມາຍເຖິງບຸກຄົນ ກົງສຸນໃຫ່ຍ, ຮອງກົງສຸນ ໃຫ່ຍ, ຮອງກົງສຸນ, ຜູ້ຊ່ວຍກົງສຸນ ຫລືຕົວແທນກົງສຸນ;

ຈ."ພະນັກງານບໍລິຫານ ແລະ ພະນັກງານ ເຕັກນິກ ຂອງສໍານັກງານ ກົງສຸນ"ຫມາຍເຖິງ ບຸກຄົນໃດໜຶ່ງ ຜູ້ທີ່ປະຕິບັດຫນ້າທີ່ ດ້ານບໍລິຫານ ແລະ ເຕັກນິກຢູ່ໃນສໍານັກງານ ກົງສຸນ;

ສ."ຄົນຮັບໃຊ້ ຂອງສໍານັກງານກົງສຸນ" ຫມາຍເຖິງບຸກຄົນໃດໜຶ່ງ ທີ່ໄດ້ຮັບໃຊ້ ວຽກງານພາຍໃນ ຂອງສໍານັກງານກົງສຸນ;

ຊ."ສະມາຊິກສໍານັກງານກົງສຸນ" ຫມາຍເຖິງບັນດາລັດຖະກອນ ກົງສຸນ, ພະ ນັກງານບໍລິຫານ, ພະນັກງານເຕັກນິກ ແລະຄົນຮັບໃຊ້ໃນ ສໍານັກງານກົງສຸນ;

ຍ."ສະມາຊິກຄອບຄົວ" ຫມາຍເຖິງຄູ່ຜົວເມັຽ ກໍ່ຄືລູກ ທີ່ບໍ່ເຕັມ ອາຍຸກະສຽນ ທີ່ ດໍາລົງຊີວິດ ຮ່ວມ ກັບຄອບຄົວດຽວກັນ ກັບ ສະມາຊິກສໍານັກງານ ກົງສຸນ;

ດ. "ຄົນຮັບໃຊ້ສ່ວນຕົວ" ຫມາຍເຖິງບຸກຄົນ ທີ່ຮັບໃຊ້ສ່ວນຕົວ ຂອງສະມາຊິກ ສໍານັກງານກົງສຸນ ຜູ້ໃດຜູ້ໜຶ່ງ ໂດຽສະເພາະ;

ຕ."ສະຖານ ທີ່ ກົງສຸນ" ຫມາຍເຖິງ ເຄຫາສະຖານ ຫລື ພາກສ່ວນ ເຄຫາສະ ຖານ ແລະ ດິນບ້ານ ທີ່ຕິດກັບ ເຄຫາສະຖານ ດັ່ງກ່າວ ຊຶ່ງຈະເປັນກໍາມະສິດ ຂອງ ບຸກຄົນໃດກໍ່ຕາມ ທີ່ໃຊ້ໃນຜົນປະ ໂຫຍດ ຂອງສໍານັກງານກົງສຸນ ໂດຽສະເພາະ;

ຖ." ບັນນະສານກົງສຸນ" ຫມາຍເຖິງທຸກເຈັ້ຽ ຈົດຫມາຍ, ເອກະສານ, ປື້ມ, ທະບຽນ ຂອງສໍານັກງານກົງສຸນ ລວມທັງໂທລະເລກ ຟີມ, ກໍ້ເທບ ແລະ ກົດ ລັບ, ບັດທະບຽນ ແລະ ບັນດາ ວັດຖຸສິ່ງຂອງ ເພື່ອໃຊ້ ເກັບມ້ຽນ ແລະ ຮັກສາ ບັນນະສານ ຂອງ ສໍານັກງານ ກົງສຸນ;

ທ." ບຸກຄົນທີ່ຖືສັນຊາດລັດທີ່ສົ່ງ" ຫມາຍເຖິງ ບຸກຄົນ ທີ່ຖືສັນຊາດ ຂອງລັດ ທີ່ ສົ່ງ, ກໍ່ຄື ນິຕິບຸກຄົນ ຂອງລັດທີ່ສົ່ງ ໃນເວລາທີ່ ເຫມາະສົມ;
ນ."ກຳປັ່ນ ຂອງລັດທີ່ສົ່ງ" ຫມາຍເຖິງ ກຳປັ່ນ ທຸກຊະນິດທີ່ຕິດທຸງ ຂອງລັດທີ່ ສົ່ງ ໂດຍຕາມກົດໝາຍຂອງລັດທີ່ສົ່ງ ບໍ່ລວມເຖິງ ກຳປັ່ນທະຫານ;
ບ. "ຍົນເຫາະ ຂອງລັດທີ່ສົ່ງ " ໝາຍເຖິງ ຍົນເຫາະທີ່ໄດ້ຈົດທະບຽນ ແລະ ຕິດເຄື່ອງໝາຍ ຂອງລັດທີ່ສົ່ງ ແຕ່ບໍ່ລວມເຖິງ ຍົນເຫາະ ທະຫານ.

## ພາກທີ່ ສອງ

## ວ່າດ້ວຍການສະຖາປານາ ສຳນັກງານກົງສຸນ ແລະ ການແຕ່ງຕັ້ງ ລັດຖະກອນກົງສຸນ

### ມາດຕາ 2

### ການສະຖາປານາສຳນັກງານກົງສຸນ

1). ສຳນັກງານກົງສຸນ ອາດຖືກສະຖາປະນາ ຂຶ້ນໄດ້ ໃນດິນແດນ ຂອງລັດທີ່ ຮັບ ກໍ່ຕໍ່ເມື່ອໄດ້ຮັບຄວາມເຫັນດີ ເຫັນພ້ອມຈາກລັດນັ້ນ.
2). ການກຳນົດ ທີ່ ຕັ້ງຂອງສຳນັກງານ ກົງສຸນ, ຊັ້ນ ແລະ ເຂດກົງສຸນ ລວມທັງ ການປ່ຽນແປງຕ່າງໆ ທີ່ກ່ຽວຂ້ອງ ແມ່ນຈະຕ້ອງຜ່ານ ການປຶກສາ ຫາລືກັນ ລະຫວ່າງ ລັດທີ່ສົ່ງ ແລະ ລັດທີ່ຮັບ.

### ມາດຕາ 3

ການແຕ່ງຕັ້ງ ແລະ ການຮັບຮອງເອົາ ຫົວຫນ້າ ສຳນັກງານ ກົງສຸນ.
1). ລັດທີ່ສົ່ງ ຈະຕ້ອງສົ່ງຈົດຫມາຍ ແຕ່ງຕັ້ງ ຫົວຫນ້າສຳນັກງານກົງສຸນ ເຖິງ ລັດທີ່ຮັບ ໂດຍຜ່ານວິທີທາງການທູດ. ຈົດຫມາຍນີ້ ຕ້ອງບອກແຈ້ງ ຊື່ ແລະ ນາມສະກຸນ ແລະ ຊັ້ນ ຕຳແໜ່ງ ຂອງຫົວຫນ້າສຳນັກງານກົງສຸນ, ທີ່ຕັ້ງ ແລະ ຊັ້ນຂອງສຳນັກ ງານກົງສຸນ ແລະ ເຂດກົງສຸນ.
2) ລັດທີ່ຮັບ ໃນເມື່ອໄດ້ຮັບ ຈົດຫມາຍທາງການ ກ່ຽວກັບ ການແຕ່ງຕັ້ງຫົວ

ໜ້າສຳນັກງານກົງສຸນແລ້ວ ຄວນຕອບດ້ວຍ ຈົດຫມາຍ ເຫັນຊອບ ໂດຽໄວ ເທົ່າທີ່ຈະໄວໄດ້. ໃນເວລາປະຕິເສດການຮັບຮູ້ນັ້ນ ລັດທີ່ຮັບຈະບໍ່ມີຄວາມຈຳເປັນ ອະທິບາຍເຖິງເຫດຜົນ.

3). ຫົວໜ້າ ສຳນັກງານກົງສຸນ ສາມາດຈະປະຕິບັດໜ້າທີ່ກົງສຸນ ຂອງຕົນ ໄດ້ພາຍຫລັງ ການອອກຈົດໝາຍຮັບຮູ້ທາງການ ຈາກ ລັດທີ່ຮັບ. ກ່ອນຈົດໝາຍຮັບຮູ້ທາງການ, ຫົວໜ້າ ສຳນັກງານ ກົງສຸນ ອາດຈະປະຕິບັດ ໜ້າທີ່ ຂອງຕົນໄດ້ຊົ່ວຄາວໂດຍໄດ້ຮັບຄວາມເຫັນດີ ເຫັນພ້ອມ ຈາກລັດທີ່ຮັບ.

4). ໃນເມື່ອລັດທີ່ຮັບ ໃຫ້ການຮັບຮູ້ ຫົວໜ້າສຳນັກງານກົງສຸນ ຫລື ອະນຸຍາດ ໃຫ້ປະຕິບັດໜ້າທີ່ ໄດ້ເປັນການຊົ່ວຄາວແລ້ວ, ລັດທີ່ ຮັບຕ້ອງແຈ້ງໃຫ້ ເຈົ້າໜ້າທີ່ຮັບ ຜິດຊອບ ໃນເຂດ ກົງສຸນ ຊາບໂດຍ ທັນທີ່ ພ້ອມທັງດຳເນີນ ມາດຕາ ການຕ່າງໆທີ່ຈຳເປັນທັງໝົດ ເພື່ອໃຫ້ ຫົວໜ້າສຳນັກງານ ກົງສຸນສາມາດປະຕິບັດ ໜ້າທີ່ຂອງຕົນໄດ້ ພ້ອມທັງໄດ້ຮັບສິດ ຂໍ້ສະດວກ, ອະພິສິດ ແລະ ການຄຸ້ມກັນ ດັ່ງທີ່ໄດ້ບົ່ງໄວ້ ໃນສົນທິສັນຍາສະບັບນີ້.

<u>ມາດຕາ 4</u>

ວ່າດ້ວຍການປະຕິບັດ ຜູ້ວ່າການຊົ່ວຄາວ

ແທນຫົວໜ້າ ສຳນັກງານກົງສຸນ

1). ຖ້າ ຫົວໜ້າ ສຳນັກງານ ກົງສຸນຫາກຕິດຂັດໂດຍບໍ່ສາມາດປະຕິບັດ ໜ້າທີ່ ການຂອງຕົນໄດ້ ຈະດ້ວຍເຫດຜົນອັນໃດ ອັນໜຶ່ງ ກໍ່ຕາມຫລືວ່າ ຖ້າຕຳແໜ່ງ ຂອງຜູ້ກ່ຽວຫາກ ຫວ່າງລົງຊົ່ວຄາວ. ລັດທີ່ສົ່ງສາມາດແຕ່ງຕັ້ງ ລັດຖະກອນກົງສຸນຜູ້ໃດ ຜູ້ໜຶ່ງທີ່ປະຈຳສຳນັກງານກົງສຸນ ຫລື ປະຈຳສຳນັກງານກົງສຸນ ບ່ອນໃດ ບ່ອນ ໜຶ່ງ ຂອງ ຕົນທີ່ ຢູ່ໃນລັດທີ່ຮັບ ຫລື ພະນັກງານການທູດ ຜູ້ໃດ ຜູ້ໜຶ່ງ ທີ່ປະຈຳ ສະຖານທູດຂອງຕົນຢູ່ໃນລັດທີ່ຮັບ ໃຫ້ເປັນ ຜູ້ວ່າການແທນ ຫົວໜ້າສຳນັກງານ ກົງສຸນນັ້ນ, ລັດທີ່ສົ່ງ ຈະແຈ້ງລ່ວງໜ້າໃຫ້ ລັດທີ່ຮັບ ຊາບກ່ຽວກັບຊື່ ແລະ ນາມສະ ກຸນ, ຊັ້ນຕຳແໜ່ງເດີມ ຂອງຜູ້ວ່າການແທນ ຫົວໜ້າສຳນັກງານ ກົງສຸນນີ້.

2). ຜູ້ວ່າການແທນ ຫົວໜ້າສໍານັກງານກົງສຸນ ໄດ້ຮັບສິດ, ຂໍ້ສະດວກ, ອະພິສິດ ແລະ ການຄຸ້ມກັນ ເໝືອນກັນກັບຫົວໜ້າສໍານັກງານ ກົງສຸນໄດ້ຮັບ ດັ່ງທີ່ໄດ້ບົ່ງໄວ້ໃນສົນທິສັນຍາສະບັບນີ້.

3). ພະນັກງານ ການທູດ ຜູ້ທີ່ ຖືກແຕ່ງຕັ້ງ ໃຫ້ເປັນ ຜູ້ວ່າການແທນ ຫົວໜ້າສໍານັກງານ ກົງສຸນ ຈະສືບຕໍ່ ໄດ້ ຮັບອະພິສິດ ແລະການຄຸ້ມກັນການທູດ ທີ່ຜູ້ກ່ຽວມີສິດໄດ້ ຮັບຢ່າງເຕັມສ່ວນແລ້ວນັ້ນ.

## ມາດຕາ 5

## ວ່າດ້ວຍການແຈ້ງການ ການມາເຖິງ ແລະ ການຈາກໄປ.

ລັດທີ່ສົ່ງ ຄວນແຈ້ງລາຍການດັ່ງລຸ່ມນີ້ ໂດຍລາຍລັກອັກສອນ ໃຫ້ລັດທີ່ຮັບໃນເວລາອັນເໝາະສົມ:

ກ).ຊື່ ແລະ ນາມສະກຸນ, ໜ້າທີ່ຕໍາແໜ່ງຂອງ ບັນດາສະມາຊິກສໍານັກງານກົງສຸນ, ແລະ ວັນມາຮອດ, ວັນຈາກໄປຢ່າງຖາວອນ ຫລືການພົ້ນຈາກໜ້າທີ່ການ ຂອງພວກກ່ຽວ, ກໍ່ຄື ທຸກການປ່ຽນແປງອື່ນໆ ທີ່ກ່ຽວກັບຖານະໜ້າ ທີ່ ການຂອງພວກກ່ຽວ. ເຊິ່ງອາດຈະເກີດຂຶ້ນໃນໄລຍະ ທີ່ພວກກ່ຽວ ປະຈໍາການ ຢູ່ ສໍານັກງານກົງສຸນ;

ຂ). ຊື່ ແລະ ນາມສະກຸນ ສັນຊາດ ແລະ ວັນມາເຖິງ, ວັນຈາກໄປຖາວອນ ສະມາຊິກ ຄອບຄົວ ຂອງ ສະມາຊິກ ສໍານັກງານກົງສຸນ ແລະ ຕາມສະພາບຂອງ ບຸກຄົນຜູ້ທີ່ເປັນ ຫລື ເຊົາເປັນ ສະມາຊິກຄອບຄົວ;

ຄ).ຊື່ ແລະນາມສະກຸນ, ສັນຊາດ ແລະໜ້າທີ່ ການຂອງບັນດາຄົນຮັບໃຊ້ສ່ວນຕົວ ແລະ ວັນມາເຖິງ, ວັນຈາກໄປ ຢ່າງຖາວອນຂອງສະມາຊິກຄົນຮັບໃຊ້ ສ່ວນຕົວ.

## ມາດຕາ 6

## ວ່າດ້ວຍບັດປະຈໍາຕົວ

ເຈົ້າໜ້າທີ່ ກ່ຽວຂ້ອງ ຂອງລັດທີ່ຮັບ ຈະຕ້ອງອອກບັດປະຈໍາຕົວ ທີ່ເໝາະສົມແກ່ສະມາຊິກ ສໍານັກງານ ກົງສຸນ ແລະ ສະມາຊິກຄອບຄົວ ຂອງເຂົາເຈົ້າ ໃຫ້ສອດຄ່ອງກັບລະບຽບການຂອງຕົນ ຍົກເວັ້ນ ບຸກຄົນ ຜູ້ທີ່ຖືສັນຊາດ ຫລື ຜູ້ທີ່ມີພູມລໍາເນົາ

ຖາວອນ ຢູ່ໃນລັດທີ່ຮັບ.

## ມາດຕາ 7:

## ວ່າດ້ວຍ ສັນຊາດຂອງບັນດາສະມາຊິກ
## ສຳນັກງານກົງສຸນ ແລະບັນດາ ຄົນຮັບ ໃຊ້ສ່ວນຕົວ

1). ລັດຖະກອນກົງສຸນ ຈະຕ້ອງແມ່ນບຸກຄົນທີ່ຖືສັນຊາດ ຂອງລັດທີ່ສົ່ງ ແລະ ບໍ່ແມ່ນບຸກຄົນທີ່ມີ ພູມລຳເນົາຖາວອນ ຢູ່ໃນລັດທີ່ ຮັບ.

2). ພະນັກງານດ້ານບໍລິຫານແລະເຕັກນິກໃນສຳນັກງານກົງສຸນແລະຄົນຮັບໃຊ້ສ່ວນຕົວຈະແມ່ນບຸກຄົນ ທີ່ຖືສັນຊາດລັດທີ່ສົ່ງຫລືບຸກຄົນທີ່ຖືສັນຊາດລັດທີ່ຮັບກໍ່ໄດ້.

## ມາດຕາ 8

## ກ່ຽວກັບບຸກຄົນ ທີ່ບໍ່ເພິ່ງປາດຖະໜາ

1). ລັດທີ່ຮັບ ສາມາດແຈ້ງໃຫ້ ລັດທີ່ສົ່ງຮູ້ ໂດຍທາງການທູດໄດ້ ໃນທຸກໂອກາດ ແລະ ໂດຍບໍ່ຈຳເປັນຈະແຈ້ງເຫດຜົນວ່າ ບຸກຄົນໃດ ບຸກຄົນໜຶ່ງ ໃນສະມາຊິກສຳນັກງານກົງສຸນ ວ່າເປັນບຸກຄົນ ທີ່ບໍ່ເພິ່ງປາຖະໜາ ຫລື ເປັນບຸກຄົນທີ່ຮັບເອົາບໍ່ໄດ້.

2). ໃນກໍລະນີ ເກີດມີສະພາບ ດັ່ງທີ່ກ່າວໄວ້ໃນວັກ 1 ຂອງ ມາດຕານີ້, ລັດທີ່ສົ່ງຕ້ອງຮຽກຕົວຜູ້ກ່ຽວນັ້ນຄືນຫລືຕ້ອງໃຫ້ຜູ້ກ່ຽວຢຸດຕິການປະຕິບັດວຽກງານຂອງຕົນຢູ່ໃນສຳນັກງານກົງສຸນ. ຖ້າຫາກວ່າ ລັດທີ່ສົ່ງ ບໍ່ປະຕິບັດພັນທະ ດັ່ງກ່າວ ຂອງຕົນ ໃນໄລຍະເວລາອັນເໝາະສົມ ລັດທີ່ຮັບ ມີສິດຖອນ ການຮັບຮູ້ຕໍ່ຜູ້ ກ່ຽວຫລືຈະບໍ່ຖືວ່າບຸກຄົນດັ່ງກ່າວນີ້ເປັນສະມາຊິກ ໃນສຳນັກງານກົງສຸນຕໍ່ໄປອີກ.

## ພາກທີ່ ສາມ

## ວ່າດ້ວຍໜ້າທີ່ ການກົງສຸນ

## ມາດຕາ 9

## ວ່າດ້ວຍໜ້າທີ່ກົງສຸນທົ່ວໄປ

ລັດຖະກອນກົງສຸນ ມີສິດປະຕິບັດ ໜ້າທີ່ ການດັ່ງຕໍ່ໄປນີ້:

ກ). ປົກປັກຮັກສາ ສິດ ແລະ ຜົນປະໂຫຍດ ຂອງລັດທີ່ສົ່ງ ແລະຂອງບຸກຄົນທີ່ຖືສັນຊາດຂອງລັດທີ່ສົ່ງ;

ຂ). ເສີມຂະຫຍາຍ ສາຍພົວພັນໃນດ້ານເສດຖະກິດ, ການຄ້າ, ວິທະຍາສາດ, ເຕັກໂນໂລຊີ ວັດທະນະທຳ ແລະ ການສຶກສາ ລະຫວ່າງ ລັດທີ່ສົ່ງ ແລະລັດທີ່ຮັບເສີມຂະຫຍາຍ ສາຍພົວພັນ ມິດຕະພາບ ແລະ ການຮ່ວມມືໃນດ້ານອື່ນໆ;

ຄ). ເອົາຂ່າວຄາວ ໂດຍທຸກວິທີທາງ ທີ່ຖືກຕ້ອງຕາມກົດໝາຍ ຂອງລັດທີ່ຮັບໃນດ້ານເສດຖະກິດ, ການຄ້າ,ວິທະຍາສາດ,ເຕັກໂນໂລຊີ,ວັດທະນະທຳ,ການສຶກສາແລະດ້ານອື່ນໆ, ແລ້ວລາຍງານ ເລື່ອງເຫລົ່ານັ້ນໄປຍັງ ລັດຖະບານຂອງລັດທີ່ສົ່ງ;

ງ). ປະຕິບັດໜ້າທີ່ ການອື່ນໆ ທີ່ໄດ້ຖືກມອບໝາຍ ຈາກລັດທີ່ສົ່ງ ທີ່ບໍ່ມີການຕ້ອງຫ້າມທາງດ້ານກົດໝາຍ ແລະ ລະບຽບການຂອງລັດທີ່ຮັບ ຫລື ບໍ່ມີການຄັດຄ້ານຫຍັງ ຈາກລັດທີ່ຮັບ.

## <u>ມາດຕາ 10</u>

## ວ່າດ້ວຍການຮ້ອງຂໍ ກ່ຽວກັບສັນຊາດ ແລະ ການຂຶ້ນທະບຽນພົນລະເມືອງ

1). ລັດຖະການກົງສຸນ ມີສິດ:

ກ. ຮັບເອົາຄຳຮ້ອງຂໍ ກ່ຽວກັບສັນຊາດ;

ຂ. ການຂຶ້ນທະບຽນ ຂອງບັນດາບຸກຄົນ ທີ່ ຖືສັນຊາດຂອງລັດທີ່ສົ່ງ;

ຄ. ການຂຶ້ນທະບຽນ ການເກີດ ແລະ ການມໍລະນະກຳ ຂອງບຸກຄົນທີ່ຖື ສັນຊາດ ຂອງລັດທີ່ສົ່ງ;

ງ. ການຂຶ້ນທະບຽນ ການແຕ່ງດອງ ຂອງບັນດາບຸກຄົນທີ່ຖື ສັນຊາດ ຂອງລັດທີ່ສົ່ງ ແລະ ອອກໜັງສືແຕ່ງງານໃຫ້ແກ່ເຂົາເຈົ້າ.

2). ບັນດາຂໍ້ກຳນົດ ໃນຂໍ້ທີ່ 1 ຂອງມາດຕານີ້ ຈະບໍ່ເຮັດໃຫ້ບຸກຄົນ ທີ່ກ່ຽວຂ້ອງຖືກຍົກເວັ້ນ ຈາກຄວາມຈຳເປັນ ຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການ ຂອງລັດທີ່ຮັບ.

## ມາດຕາ 11

## ວ່າດ້ວຍການອອກໜັງສືຜ່ານແດນ ແລະ ອອກວີຊາ

ລັດຖະກອນກົງສຸນມີສິດ :

ກ). ອອກໜັງສືຜ່ານແດນ ແລະ ເອກະສານເດີນທາງອື່ນໆ ໃຫ້ແກ່ ບຸກຄົນທີ່ຖືສັນຊາດຂອງລັດທີ່ສົ່ງ ແລະ ການປ່ຽນແປງ ຫລື ລົບລ້າງໜັງສືຜ່ານແດນ ຫລື ເອກະສານດັ່ງກ່າວນັ້ນ;

ຂ).ອອກວີຊາ ໃຫ້ບຸກຄົນທີ່ ຈະເດີນທາງໄປຫລືຈະຜ່ານລັດທີ່ສົ່ງ. ກໍ່ຄືການປ່ຽນແປງຫລື ລົບລ້າງ ວີຊາທີ່ໄດ້ ອອກໃຫ້ແລ້ວ.

## ມາດຕາ 12

## ວ່າດ້ວຍການຢັ້ງຢືນ ຖືກຕ້ອງຕາມກົດໝາຍ ແລະ ການຮັບຮອງເປັນຫລັກຖານ

1). ລັດຖະກອນ ກົງສຸນມີສິດ:

ກ). ອອກເອກະສານຕ່າງໆ ໃຫ້ແກ່ຄົນ ສັນຊາດໃດສັນຊາດໜຶ່ງ ເພື່ອນຳໃຊ້ໃນລັດທີ່ສົ່ງຕາມຄຳຮ້ອງຂໍ ຂອງບຸກຄົນນັ້ນ;

ຂ). ອອກເອກະສານຕ່າງໆ ໃຫ້ແກ່ບຸກຄົນທີ່ ຖືສັນຊາດຂອງ ລັດທີ່ສົ່ງ ເພື່ອນຳໃຊ້ ຢູ່ນອກລັດທີ່ສົ່ງ, ຕາມຄຳຮ້ອງຂໍຂອງບຸກຄົນສັນຊາດ ນັ້ນ;

ຄ). ແປເອກະສານໃຫ້ເປັນ ພາສາທາງການ ຂອງລັດທີ່ສົ່ງຫລື ຂອງລັດທີ່ຮັບ, ແລະ ຢັ້ງຢືນວ່າການແປ ຖືກຕ້ອງຕາມສະບັບ ເດີມ;

ງ). ປະຕິບັດໜ້າທີ່ ຢັ້ງຢືນອື່ນໆຊຶ່ງຖືກມອບໝາຍໃຫ້ໂດຍລັດທີ່ສົ່ງ ແລະ ລັດທີ່ຮັບ ບໍ່ມີຄວາມຄັດຄ້ານ;

ຈ). ຢັ້ງຢືນ ລາຍເຊັນແລະກາປະທັບໃສ່ເອກະສານທີ່ອອກໃຫ້ໂດຍເຈົ້າໜ້າທີ່ກ່ຽວຂ້ອງ ຂອງລັດທີ່ສົ່ງ ຫລື ຂອງລັດທີ່ຮັບ.

2). ການອອກເອກະສານຕ່າງໆ ການຢັ້ງຢືນ ຫລື ການຮັບຮອງ ໂດຍລັດຖະກອນ ກົງສຸນ ເພື່ອນຳໃຊ້ ໃນລັດທີ່ຮັບ ທີ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ

ຂອງລັດທີ່ຮັບ ຈະມີຄຸນຄ່າເທົ່າທຽມກັນ ແລະ ມີຜົນສັກສິດເໝືອນການອອກ ເອກະສານຕ່າງໆ ການຢັ້ງຢືນ ຫລື ຮັບຮອງ ໂດຍເຈົ້າໜ້າທີ່ ກ່ຽວຂ້ອງ ຂອງລັດ ທີ່ຮັບ.

3). ລັດຖະກອນ ກົງສຸນ ມີສິດຮັບຫລື ຮັກສາຊົ່ວຄາວ ໃບຢັ້ງຢືນ ແລະ ເອກະສານ ຂອງບຸກຄົນ ທີ່ຖືສັນຊາດຂອງລັດທີ່ສົ່ງ ພາຍໃຕ້ເງື່ອນໄຂ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດທີ່ຮັບ.

<u>ມາດຕາ 13</u>

ວ່າດ້ວຍການແຈ້ງການ ກ່ຽວກັບການກັກຂັງ ການຈັບ
ແລະ ການເຂົ້າ ຢ້ຽມຢາມ

1). ຖ້າຫາກບຸກຄົນທີ່ຖືສັນຊາດ ຂອງລັດທີ່ສົ່ງ ຖືກກັກຕົວ, ຈັບກຸມ ຫລືຕັດສິດອິດສະລະພາບ ໂດຍວິທີໃດ ວິທີໜຶ່ງ ໃນເຂດກົງສຸນ ໂດຍເຈົ້າໜ້າທີ່ ກ່ຽວຂ້ອງ ຂອງລັດທີ່ຮັບ, ເຈົ້າໜ້າທີ່ ດັ່ງກ່າວ ຕ້ອງແຈ້ງບັນຫານັ້ນ ໃຫ້ສຳນັກງານ ກົງສຸນໄວເທົ່າທີ່ຈະໄວໄດ້.

2). ລັດຖະກອນ ກົງສຸນມີສິດ ເຂົ້າຢ້ຽມຢາມ ບຸກຄົນ ທີ່ຖືສັນຊາດ ລັດທີ່ ສົ່ງທີ່ຖືກກັກຂັງ, ຖືກຈັບກຸມ ຫລື ຖືກຕັດສິດອິດສະລະພາບ ໂດຍວິທີໃດວິທີໜຶ່ງ ມີສິດໂອ້ລົມ ຫລືຕິດຕໍ່ກັບຜູ້ກ່ຽວ, ກໍ່ຄືການໃຫ້ ການຊ່ວຍເຫລືອ ທາງດ້ານກົດໝາຍ ແກ່ຜູ້ກ່ຽວ. ເຈົ້າໜ້າທີ່, ທີ່ກ່ຽວຂ້ອງ ຂອງລັດທີ່ຮັບຄວນຈັດໃຫ້ກົງສຸນ ເຂົ້າໄປຢ້ຽມຢາມ ບຸກຄົນ ທີ່ຖືສັນຊາດ ລັດທີ່ສົ່ງ ທີ່ໄດ້ກ່າວມາໃນຂ້າງເທິງນີ້ ໂດຍໄວເທົ່າທີ່ຈະໄວໄດ້.

3). ລັດຖະກອນ ກົງສຸນ ມີສິດ ທຳການຢ້ຽມຢາມບຸກຄົນ ທີ່ຖືສັນຊາດ ລັດທີ່ສົ່ງທີ່ກຳລັງຖືກ ລົງໂທດຕາມການຕັດສິນ.

4). ເຈົ້າໜ້າທີ່ ກ່ຽວຂ້ອງຂອງລັດທີ່ຮັບ ຄວນແຈ້ງໃຫ້ບຸກຄົນ ຜູ້ກ່ຽວທີ່ຖື ສັນຊາດ ຂອງລັດທີ່ສົ່ງ ຊາບກ່ຽວກັບເນື້ອໃນບັນດາຂໍ້ ທີ່ໄດ້ກຳນົດໄວ້ໃນ ວັກ 1, ວັກ 2, ວັກ3, ຂອງ ມາດຕານີ້.

5). ລັດຖະກອນກົງສຸນ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຕ່າງໆ ຂອງ ລັດທີ່ຮັບ ໃນການປະຕິບັດໜ້າທີ່ ທີ່ໄດ້ບົ່ງໄວ້ ໃນມາດຕານີ້ ແຕ່ຫາກການ

ປະຕິບັດກົດໝາຍ ແລະ ລະບຽບການ ຕ່າງໆ ຂອງລັດທີ່ຮັບນັ້ນ ບໍ່ຄວນຈຳກັດ ການ ປະຕິບັດສິດ ທີ່ໄດ້ບົ່ງໄວ້ ໃນມາດຕານີ້.

## ມາດຕາ 14

## ວ່າດ້ວຍການຄຸ້ມຄອງ ແລະ ການພິທັກ ດູແລ

1). ໃນເວລາທີ່ມີຄວາມຕ້ອງການ ບຸກຄົນຜູ້ຄຸ້ມຄອງ ຫລື ພິທັກດູແລແກ່ຄົນທີ່ຖືສັນຊາດຂອງລັດທີ່ສົ່ງ ທີ່ບໍ່ມີຄວາມສາມາດ ຫລື ມີຄວາມສາມາດຈຳກັດ ໃນການຮັບຜິດຊອບໂດຍຕົນເອງ ຊຶ່ງລວມມີຜູ້ທີ່ບໍ່ທັນເຖິງ ອາຍຸກະສຽນນຳ, ໃນເຂດກົງສຸນແລ້ວ ບັນດາເຈົ້າໜ້າທີ່ກ່ຽວຂ້ອງຂອງລັດທີ່ຮັບ ຈະຕ້ອງແຈ້ງການໃຫ້ ສຳນັກງານກົງສຸນຊາບ.

2). ລັດຖະກອນກົງສຸນ ມີສິດປົກປັກຮັກສາສິດແລະ ຜົນປະໂຫຍດຂອງບຸກຄົນທີ່ຖືສັນຊາດ ຂອງລັດທີ່ສົ່ງ ຜູ້ທີ່ຂາດຄວາມສາມາດ ຫລືມີຄວາມສາມາດ ຈຳກັດໃນການຮັບຜິດຊອບໂດຍຕົນເອງ ຊຶ່ງລວມທັງບຸກຄົນ ທີ່ມີອາຍຸບໍ່ເຖິງກະສຽນ ແລະ ເມື່ອມີຄວາມຈຳເປັນ ກໍ່ສະເໜີ ຫລືແຕ່ງຕັ້ງຜູ້ຄຸ້ມຄອງ ແລະ ຜູ້ພິທັກດູແລ ແກ່ບຸກຄົນ ທີ່ກ່ຽວຂ້ອງດັ່ງກ່າວ ແລະ ຕິດຕາມການເຄື່ອນໄຫວຕ່າງໆ ທີ່ກ່ຽວເຖິງ ການ ຄຸ້ມຄອງ ແລະ ການພິທັກດູແລນັ້ນ.

## ມາດຕາ 15

## ວ່າດ້ວຍການໃຫ້ຄວາມຊ່ວຍເຫລືອບຸກຄົນ ທີ່ຖືສັນຊາດຂອງລັດທີ່ສົ່ງ

1). ລັດຖະກອນກົງສຸນ ມີສິດ:

ກ). ຕິດຕໍ່ພົບປະກັບບຸກຄົນ ທີ່ຖືສັນຊາດ ຂອງລັດທີ່ສົ່ງໃນເຂດກົງສຸນ. ລັດທີ່ຮັບ ບໍ່ຄວນຈຳກັດການຕິດຕໍ່ພົວພັນຂອງບັນດາບຸກຄົນ ທີ່ຖື ສັນຊາດ ຂອງລັດທີ່ສົ່ງ ກັບສຳນັກງານກົງສຸນ ກໍຄືການເຂົ້າໄປໃນ ສຳນັກງານກົງສຸນ;

ຂ). ຊອກຮູ້ ສະພາບການ ຕ່າງໆ ໃນ ການດຳລົງຊີວິດ ແລະ ການເຮັດວຽກຂອງ ບຸກຄົນ ທີ່ຖືສັນຊາດ ຂອງລັດທີ່ສົ່ງໃນລັດທີ່ຮັບ ແລະ ໃຫ້

ຄວາມຊ່ວຍເຫລືອ ທີ່ຈໍາເປັນແກ່ຜູ້ກົງສຸນ;

ຄ). ຖ້າມີຄວາມຈໍາເປັນ ຮ້ອງຂໍໃຫ້ເຈົ້າໜ້າທີ່ ທີ່ກົງສຸນຂອງ ຂອງລັດທີ່ຮັບສືບຫາທີ່ ຢູ່ອາໃສຂອງບຸກຄົນ ທີ່ຖືສັນຊາດຂອງລັດທີ່ສົ່ງ ແລະ ເຈົ້າ ໜ້າທີ່ກົງສຸນຂອງຂອງລັດທີ່ຮັບຕ້ອງເຮັດ ທຸກສິ່ງທຸກຢ່າງທີ່ ເຮັດໄດ້ ເພື່ອໃຫ້ຂ່າວຄາວ ກ່ຽວກັບເລື່ອງດັ່ງກ່າວ;

ງ).ຮັບເອົາ ແລະ ຮັກສາ ເງິນຄໍາຊົ່ວຄາວ ຫລື ຂອງມີຄ່າ ຂອງຄົນ ທີ່ຖືສັນ ຊາດຂອງລັດທີ່ສົ່ງຢູ່ໃນຂອບເຂດ ຂອງກົດໝາຍ ແລະ ລະບຽບການຂອງລັດທີ່ຮັບ.

2). ກໍລະນີ ບຸກຄົນ ທີ່ຖືສັນຊາດ ຂອງລັດທີ່ສົ່ງ ບໍ່ຢູ່ໃນທ້ອງຖິ່ນນັ້ນຫລື ດ້ວຍເຫດຜົນ ອື່ນໆ ບໍ່ສາມາດ ປ້ອງກັນສິດ ແລະ ຜົນປະໂຍດຂອງຕົນເອງໃຫ້ທັນເວລາ, ລັດຖະກອນກົງສຸນ ອາດຈະຕາງໜ້າ ຫລື ຈັດຫາຕົວແທນທີ່ເໝາະສົມໃຫ້ ຜູ້ກົງສຸນຢູ່ຕໍ່ໜ້າສານ ຫລື ເຈົ້າ ໜ້າທີ່ກົງສຸນຂອງອື່ນໆ ຂອງລັດທີ່ຮັບໂດຍຖືກຕ້ອງສອດຄ່ອງກັບ ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດທີ່ຮັບ ຈົນກ່ວາເຂົາ ແຕ່ງຕັ້ງຕົວແທນຂອງຕົນເອງ ຫລືສາມາດປ້ອງກັນສິດ ແລະ ຜົນປະໂຫຍດຂອງຕົນເອງໄດ້.

## ມາດຕາ 16

## ວ່າດ້ວຍການແຈ້ງຂ່າວມໍລະນະກໍາ

ພາຍຫລັງໄດ້ຮັບຂ່າວ ມໍລະນະກໍາ ຂອງບຸກຄົນ ທີ່ ຖືສັນຊາດຂອງລັດທີ່ສົ່ງ ຢູ່ໃນລັດ ທີ່ຮັບ, ເຈົ້າໜ້າທີ່ ກົງສຸນຂອງຂອງລັດທີ່ຮັບ ຕ້ອງແຈ້ງໃຫ້ ສໍານັກງານກົງສຸນໄວ ເທົ່າທີ່ຈະໄວໄດ້, ແລະ ໃຫ້ໃບຢັ້ງຢືນ ການມໍລະນະກໍາ ຫລື ສໍາເນົາເອກະສານອື່ນໆ ຢັ້ງຢືນ ວ່າໄດ້ມໍລະນະກໍາ ຕາມຄໍາຮ້ອງຂອງ ສໍານັກງານກົງສຸນ.

## ມາດຕາ 17

## ວ່າດ້ວຍໜ້າທີ່ ກ່ຽວກັບ ມໍລະດົກ

1). ຖ້າຫາກບຸກຄົນ ທີ່ຖືສັນຊາດຂອງລັດທີ່ສົ່ງ ໄດ້ເສັຽຊີວິດ ໄດ້ປະຊັບສົມບັດຢູ່ໃນລັດທີ່ຮັບ ແລະ ບໍ່ມີຜູ້ສືບທອດ ຫລື ຜູ້ຄຸ້ມຄອງພີໃນກໍາ ຢູ່ໃນລັດທີ່ຮັບໃຫ້ເຈົ້າໜ້າທີ່ ກົງສຸນຂອງ ຂອງລັດທີ່ຮັບ ແຈ້ງໃຫ້ສໍານັກງານກົງສຸນຮູ້ ໂດຍດ່ວນ.

໒). ລັດຖະກອນ ກົງສຸນ ມີສິດມີໜ້າ ເມື່ອເວລາ ມໍລະດົກ ທີ່ອ້າງເຖິງຢູ່ໃນວັກ 1 ຂອງ ມາດຕານີ້ ກຳລັງຖືກສຳຫລວດ ເຮັດບັນຊີ ແລະ ປະທັບຕາ ຈາກເຈົ້າໜ້າທີ່ກ່ຽວຂ້ອງຂອງ ລັດທີ່ຮັບ.

໓). ຖ້າຫາກຄົນທີ່ ຖືສັນຊາດ ລັດທີ່ສົ່ງ ເປັນຜູ້ສືບທອດຫລື ເປັນຜູ້ ມີສິດທາງກົດໝາຍ ມີສິດສືບທອດ ຫລື ຮັບເອົາ ມໍລະດົກ ຫລື ສິ່ງທີ່ຖືກມອບໃຫ້ ຈາກຜູ້ເສັຽຊີວິດ ຂອງບຸກຄົນສັນຊາດໃດ ສັນຊາດໜຶ່ງ ຕາມຂອບເຂດກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດທີ່ຮັບ ອະນຸຍາດ ແລະ ຖ້າບຸກຄົນນັ້ນ ບໍ່ມີໜ້າຢູ່ໃນ ດິນແດນຂອງລັດທີ່ຮັບ ໃຫ້ເຈົ້າຫນ້າທີ່ກ່ຽວຂ້ອງ ຂອງລັດທີ່ຮັບ ແຈ້ງໃຫ້ສຳນັກງານກົງສຸນຮູ້ກ່ຽວກັບການສືບທອດ ຫລື ການຮັບເອົາມໍລະດົກຫລື ສິ່ງທີ່ຖືກມອບ ຈາກບຸກຄົນ ທີ່ກ່າວເທິງນັ້ນ.

4). ໃນກໍລະນີ ບຸກຄົນ ທີ່ຖືສັນຊາດຂອງລັດທີ່ສົ່ງ ມີສິດ ຫລື ອ້າງວ່າເປັນຜູ້ມີສິດສືບທອດ ມໍລະດົກຢູ່ໃນລັດທີ່ຮັບ ໂດຍສອດຄ່ອງ ຕາມລະບຽບການຂອງ ລັດທີ່ຮັບ ແຕ່ ຜູ້ກ່ຽວ ຫລື ຕົວແທນຂອງເຂົາ ບໍ່ສາມາດປະກົດຕົວຢູ່ບ່ອນປະຕິບັດການ ສືບທອດນັ້ນ ໃຫ້ລັດຖະກອນກົງສຸນເອງ ຫລື ຜ່ານຕົວແທນ ຂອງເຂົາ, ມີສິດເປັນຜູ້ ຕ່າງໜ້າຢູ່ຕໍ່ໜ້າສານ ຫລື ເຈົ້າໜ້າທີ່ກ່ຽວຂ້ອງອື່ນໆ ຂອງລັດທີ່ຮັບ.

5). ລັດຖະກອນກົງສຸນ ຈະມີສິດ ຕ່າງໜ້າໃຫ້ບຸກຄົນ ທີ່ຖືສັນຊາດ ຂອງລັດທີ່ສົ່ງ ທີ່ບໍ່ແມ່ນຜູ້ທີ່ມີພູມລຳເນົາຖາວອນ ຢູ່ໃນລັດທີ່ຮັບ ຮັບເອົາຊັບສົມບັດ ຫລື ສິ່ງທີ່ຖືກມອບໃຫ້ ທີ່ແມ່ນຂອງບຸກຄົນ ຂອງລັດທີ່ສົ່ງດັ່ງກ່າວນັ້ນ ເພື່ອສົ່ງຕໍ່ໃຫ້ບຸກຄົນ ດັ່ງກ່າວ ໃນຂອບເຂດກົດໝາຍ ແລະ ລະບຽບການຂອງລັດທີ່ຮັບ ໄດ້ອະນຸຍາດໃຫ້.

໖). ຖ້າຫາກບຸກຄົນ ທີ່ ຖືສັນຊາດ ຂອງລັດທີ່ສົ່ງ ທີ່ບໍ່ມີພູມລຳເນົາ ຖາວອນ ຢູ່ໃນລັດທີ່ຮັບ ເສັຽຊີວິດຢູ່ໃນ ໄລຍະການພັກເຊົາ ຢູ່ຊົ່ວຄາວ ຫລື ເດີນທາງ ຜ່ານລັດທີ່ຮັບ, ລັດຖະກອນກົງສຸນ ມີສິດ ຮັກສາເອກະສານ, ເງິນ ແລະ ສິ່ງຂອງສ່ວນຕົວທັງໝົດຊຶ່ງມີຢູ່ຕິດຕົວກັບບຸກຄົນ ທີ່ເສັຽຊີວິດໄວ້ຊົ່ວຄາວ ເພື່ອສົ່ງມອບໃຫ້ຜູ້ສືບທອດ ແລະ ຜູ້ຄຸ້ມຄອງ ພີໃນກໍາ ຫລືບຸກຄົນອື່ນໆ ຊຶ່ງຖືກອະນຸຍາດໃຫ້ຮັບເອົາ ຊັບສົມບັດເຫລົ່ານັ້ນ.

## ມາດຕາ 18

## ວ່າດ້ວຍການຊ່ວຍເຫລືອແກ່ ກຳປັ່ນຂອງລັດທີ່ສົ່ງ

1). ລັດຖະກອນກົງສຸນ ມີສິດໃຫ້ການຊ່ວຍເຫລືອກຳປັ່ນ ຂອງລັດທີ່ສົ່ງ ລວມທັງຫົວໜ້າເຮືອ ແລະ ລູກເຮືອຊຶ່ງຢູ່ໃນນ່ານນ້ຳພາຍໃນ ຫລື ເຂດນ່ານນ້ຳທະເລຂອງລັດທີ່ຮັບ ແລະ ມີສິດດັ່ງນີ້:

ກ).ໃຫ້ ຂຶ້ນໄປເທິງກຳປັ່ນໄດ້ຢ່າງເສລີ ເມື່ອເວລາ ກຳປັ່ນຖືກອະນຸຍາດໃຫ້ ຫຼຸບທ່າ ສືບຖາມ ຫົວໜ້າເຮືອ ແລະ ສະມາຊິກລູກເຮືອ ພ້ອມ ທັງຮັບຟັງລາຍງານກ່ຽວ ກັບກຳປັ່ນສິນຄ້າ ແລະ ການເດີນທາງ;

ຂ).ສຳຫລວດອຸປະຕິເຫດທີ່ເກີດຂຶ້ນໃນລະຫວ່າງການເດີນທາງພາຍໃຕ້ເງື່ອນໄຂ ທີ່ບໍ່ແຕະຕ້ອງເຖິງອຳນາດ ຂອງບັນດາເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢູ່ໃນລັດທີ່ຮັບ;

ຄ).ແກ້ໄຂ ກໍລະນີຜິດພາດ ລະຫວ່າງຫົວໜ້າເຮືອ ແລະ ລູກເຮືອ ລວມທັງ ກໍລະນີຜິດພາດ ກ່ຽວກັບຄ່າແຮງງານ ແລະ ສັນຍາ ບໍລິການ;

ງ).ຮັບຕ້ອນ ການຢ້ຽມຢາມ ຂອງຫົວໜ້າເຮືອ ຫລື ສະມາຊິກລູກເຮືອ ແລະ ເມື່ອເວລາ ຈຳເປັນກໍ່ໃຫ້ຈັດການ ປິ່ນປົວເຂົາເຈົ້າ ຫລື ສົ່ງກັບບ້ານ;

ຈ).ຮັບເອົາ, ກວດກາ, ອອກ, ເຊັນ ຫລື ຢັ້ງຢືນວ່າຖືກຕ້ອງ ບັນດາ ເອກະສານທີ່ກ່ຽວຂ້ອງກັບ ກຳປັ່ນ;

ສ).ແກ້ໄຂບັນຫາ ອື່ນໆ ທີ່ພົວພັນເຖິງກຳປັ່ນ ທີ່ຖືກມອບໝາຍ ໂດຍບັນດາເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງລັດທີ່ສົ່ງ.

2). ຫົວໜ້າເຮືອ ແລະ ສະມາຊິກລູກເຮືອ ສາມາດຕິດຕໍ່ ກັບລັດຖະກອນ ກົງສຸນໄດ້ ພວກເຂົາເຈົ້າ ສາມາດໄປຫາ ສຳນັກງານກົງສຸນໄດ້ ຕາມເງື່ອນໄຂ ທີ່ບໍ່ຂັດກັບ ກົດໝາຍ ແລະ ລະບຽບການ ຂອງລັດທີ່ຮັບ ກ່ຽວກັບການປົກຄອງທ່າເຮືອ ແລະ ຊາວ ຕ່າງດ້າວ.

## <u>ມາດຕາ 19</u>

## ວ່າດ້ວຍການປົກປັກຮັກສາ ກຳປັ່ນຂອງລັດ ທີ່ສົ່ງໃນເວ ລາຖືກ ດຳເນີນການບີບບັງຄັບ

1). ໃນກໍລະນີສານຫລື ເຈົ້າໜ້າທີ່ ກ່ຽວຂ້ອງ ຂອງລັດ ທີ່ຮັບມີເຈດຕະນາ ດຳເນີນການບີບບັງຄັບ ຫລື ເລີ່ມທຳການ ສຳຫລວດເປັນທາງການ ກ່ຽວກັບກຳປັ່ນ ຫລືຂີ້ນໄປ ກຳປັ່ນ ຂອງລັດທີ່ສົ່ງ ເຈົ້າໜ້າທີ່ເຫລົ່ານັ້ນຕ້ອງແຈ້ງໃຫ້ ສຳນັກງານກົງສຸນຮູ້ລ່ວງໜ້າ ເພື່ອເຮັດໃຫ້ ລັດຖະກອນກົງສຸນ ຫລື ຕົວແທນຂອງເຂົາ ປະກົດຕົວ ເມື່ອເວລາດຳເນີນງານເກີດຂື້ນ ຖ້າຫາກສະພາບການຮີບດ່ວນ ບໍ່ສາມາດແຈ້ງໃຫ້ຮູ້ລ່ວງໜ້າເຈົ້າໜ້າທີ່ກ່ຽວຂ້ອງ ຂອງລັດທີ່ຮັບ ຕ້ອງແຈ້ງໃຫ້ສຳນັກງານກົງສຸນ ໂດຍດ່ວນພາຍຫລັງການດຳເນີນງານໄດ້ ເກີດຂື້ນແລ້ວ ແລະ ຕ້ອງໃຫ້ລາຍລະອຽດ ຢ່າງເຕັມສ່ວນໃນການດຳເນີນງານ ດັ່ງກ່າວຕາມຄຳຮ້ອງຂໍ ຂອງລັດຖະກອນກົງສຸນໂດຍໄວ.

2). ຂໍ້ ກຳນົດຢູ່ໃນວັກ 1 ຂອງ ມາດຕານີ້ ແມ່ນໃຊ້ໄດ້ຕໍ່ເຈົ້າໜ້າ ທີ່ກ່ຽວຂ້ອງຂອງລັດທີ່ຮັບ ຕ້ອງປະຕິບັດ ດຳເນີນການຢູ່ເທິງຝັ່ງ ແບບດຽວກັນຕໍ່ຫົວໜ້າກຳປັ່ນຫລື ສະມາຊິກລູກເຮືອ.

3). ຂໍ້ກຳນົດຢູ່ໃນວັກ 1 ແລະ 2 ຂອງ ມາດຕານີ້ ບໍ່ໄດ້ພົວພັນເຖິງ ເຈົ້າໜ້າທີ່ກ່ຽວຂ້ອງຂອງລັດທີ່ຮັບ ໃນການກວດກາປະຈຳວັນ ດ້ານພາສີ ການບໍລິຫານທ່າເຮືອ ການປ້ອງກັນພະຍາດ ຫລື ການກວດກາທາງດ້ານຊາຍແດນ ແລະ ມາດຕາການຕ່າງໆ ທີ່ນຳໃຊ້ ໂດຍເຈົ້າໜ້າທີ່ນັ້ນ ເພື່ອຮັບປະກັນ ຄວາມປອດໄພ ແລະ ການເດີນເຮືອ ໃນທະເລ ຫລື ປ້ອງກັນ ຄວາມເປື້ອນເປິະ ຂອງນ່ານນ້ຳຕ່າງໆ.

4). ບໍ່ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງລັດທີ່ຮັບ ບໍ່ໃຫ້ເຂົ້າແຊກແຊງ ວຽກງານພາຍໃນ ຂອງກຳປັ່ນ ໃນສະພາບການ ທີ່ບໍ່ມີການແຕະຕ້ອງເຖິງຄວາມສະງົບຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງລັດທີ່ຮັບເວັ້ນເສຍແຕ່ໄດ້ຮັບຄຳຮ້ອງຂໍຫລືເຫັນດີ ເຫັນພ້ອມ ຂອງຫົວໜ້າກຳປັ່ນ ຫລື ພະນັກງານກົງສຸນ.

## ມາດຕາ 20

## ວ່າດ້ວຍການຊ່ວຍເຫລືອກຳປັ່ນ
## ທີ່ເກີດອຸປະຕິເຫດ ຂອງລັດທີ່ສົ່ງ

1). ຖ້າຫາກກຳປັ່ນຂອງລັດທີ່ສົ່ງ ໄດ້ຮັບອຸປະຕິເຫດ ໃນເຂດນ່ານນ້ຳ ພາຍໃນ ຫລື ເຂດນ່ານນ້ຳທະເລຂອງລັດທີ່ຮັບ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງລັດທີ່ຮັບ ຕ້ອງແຈ້ງໃຫ້ ສຳນັກງານກົງສຸນ ຮູ້ໂດຍໄວ ເທົ່າທີ່ຈະໄວໄດ້ ແລະ ໃຫ້ແຈ້ງບັນດາ ມາດຕະການຕ່າງໆ ເພື່ອກອບກູ້ເອົາຊີວິດ ຂອງບັນດາບຸກຄົນ, ກຳປັ່ນແລະສິນຄ້າ ພ້ອມດ້ວຍຊັບສົມບັດອື່ນໆ.

2). ລັດຖະກອນກົງສຸນ ມີສິດໃຊ້ ທຸກມາດຕະການຕ່າງໆ ເພື່ອໃຫ້ຄວາມຊ່ວຍເຫລືອແກ່ກຳປັ່ນ ທີ່ຖືກອຸປະຕິເຫດຂອງລັດທີ່ສົ່ງແລະລູກເຮືອພ້ອມດ້ວຍຜູ້ໂດຍສານ, ພ້ອມທັງສາມາດຮ້ອງຂໍ ຄວາມຊ່ວຍເຫລືອ ຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງລັດທີ່ຮັບໃນດ້ານນີ້.

3). ຖ້າຫາກກຳປັ່ນຂອງລັດທີ່ສົ່ງ ທີ່ເກີດອຸປະຕິເຫດ ຫລື ເຄື່ອງຂອງ, ສິນຄ້າໃນກຳປັ່ນ ທີ່ຖືກຄົ້ນພົບຢູ່ໃກ້ຝັ່ງ ຫລື ຖືກນຳເຂົ້າມາໃນທ່າເຮືອ ຂອງລັດທີ່ຮັບ ຫົວໜ້າກຳປັ່ນ ຫລື ເຈົ້າຂອງກຳປັ່ນຕົວແທນ ຂອງບໍລິສັດກຳປັ່ນຫລືບໍລິສັດປະກັນໄພຂອງຕົນບໍ່ປະກົດຕົວ ຫລື ບໍ່ຢູ່ໃນຖານະທີ່ຈະໃຊ້ມາດຕະການຕ່າງໆ ເພື່ອຄຸ້ມກັນຫລືແກ້ໄຂໄດ້, ເຈົ້າໜ້າທີ່ ກ່ຽວຂ້ອງຂອງລັດທີ່ຮັບ ຕ້ອງແຈ້ງໃຫ້ ສຳນັກງານກົງສຸນ ຮູ້ໂດຍໄວເທົ່າທີ່ຈະໄວໄດ້. ລັດຖະກອນກົງສຸນ ອາດໃຊ້ມາດຕະການອັນເໝາະສົມ ໃນນາມຜູ້ເປັນເຈົ້າຂອງກຳປັ່ນ.

4). ກຳປັ່ນຂອງລັດທີ່ສົ່ງ ທີ່ເກີດອຸປະຕິເຫດພ້ອມດ້ວຍສິນຄ້າແລະ ເຄື່ອງບັນທຸກຕ່າງໆ ໃນນັ້ນຈະບໍ່ຖືກເກັບພາສີຫລືເກັບຄ່າຕ່າງໆໃນລັກສະນະດຽວກັນໂດຍ ລັດທີ່ຮັບ. ຖ້າວ່າສິ່ງເຫລົ່ານັ້ນບໍ່ໄດ້ນຳເຂົ້າມາເພື່ອຂາຍ ຫລື ນຳໃຊ້ຢູ່ໃນລັດທີ່ຮັບ.

## ມາດຕາ 21

### ວ່າດ້ວຍຍົນເທາະຂອງລັດທີ່ສົ່ງ

ບັນດາຂໍ້ກຳນົດຂອງ ສັນຍາສະບັບນີ້ ກ່ຽວກັບ ກຳປັ່ນ ຂອງລັດທີ່ສົ່ງ ຈະມີຜົນບັງຄັບໃຊ້ໄດ້ ດັ່ງດຽວກັນກັບຍົນເທາະ ຂອງລັດທີ່ສົ່ງ ແຕ່ການປະຕິບັດ ດັ່ງກ່າວ ນັ້ນ ຈະບໍ່ຂັດກັບຂໍ້ກຳນົດ ຂອງການຕົກລົງສອງຝ່າຍທີ່ມີຜົນບັງຄັບໃຊ້ໄດ້ລະຫວ່າງລັດທີ່ສົ່ງ ແລະ ລັດທີ່ຮັບຫລື ຂໍ້ກຳນົດ ຂອງການຕົກລົງ ຫລາຍຝ່າຍທີ່ ທັງສອງລັດໄດ້ຮ່ວມລົງນາມ.

## ມາດຕາ 22

### ວ່າດ້ວຍການ ນຳສົ່ງເອກະສານກົດໝາຍ

ລັດຖະກອນກົງສຸນມີສິດນຳສົ່ງເອກະສານທີ່ມີລັກສະນະກົດໝາຍຫລືເອກະສານທີ່ບໍ່ມີລັກສະນະກົດໝາຍ ໃນຂອບເຂດທີ່ກົດໝາຍ ແລະ ລະບຽບການ ຂອງລັດທີ່ຮັບອະນຸຍາດໃຫ້, ຂຶ້ນກັບການປະຕິບັດຕາມຂໍ້ຕົກລົງ ທີ່ມີຢູ່ແລ້ວ ລະຫວ່າງ ລັດທີ່ສົ່ງ ແລະ ລັດທີ່ຮັບ.

## ມາດຕາ 23

### ວ່າດ້ວຍຂົງເຂດ ການປະຕິບັດ ໜ້າທີ່ການກົງສຸນ

ລັດຖະກອນກົງສຸນ ຈະປະຕິບັດໜ້າທີ່ ຂອງຕົນໄດ້ຢູ່ພາຍໃນເຂດກົງສຸນຂອງຕົນເທົ່ານັ້ນ.ເຂົາອາດປະຕິບັດໜ້າທີ່ ຂອງຕົນຢູ່ນອກ ເຂດກົງສຸນໄດ້ເຊັ່ນດຽວກັນ ຖ້າໄດ້ ຮັບຄຳເຫັນດີ ເຫັນພ້ອມຈາກລັດທີ່ຮັບ.

## ມາດຕາ 24

### ວ່າດ້ວຍການຕິດຕໍ່ກັບບັນດາເຈົ້າໜ້າທີ່ ລັດທີ່ຮັບ

ໃນການປະຕິບັດໜ້າທີ່ ຂອງຕົນນັ້ນ ລັດຖະກອນກົງສຸນ ອາດຕິດຕໍ່ກັບບັນດາ ເຈົ້າໜ້າທີ່ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນເຂດກົງສຸນ ຂອງຕົນໄດ້ ແລະ ໃນເວລາ ຈຳເປັນກໍ່ ອາດຕິດຕໍ່ກັບບັນດາ ເຈົ້າໜ້າທີ່ສູນກາງທີ່ກ່ຽວຂ້ອງຂອງລັດທີ່ຮັບຕາມຂອບເຂດ ກົດໝາຍ, ລະບຽບການ ແລະ ປະເພນີ ຂອງລັດທີ່ຮັບອະນຸຍາດ.

## <u>ພາກທີ່ ສີ່</u>

## ວ່າດ້ວຍ ຂໍ້ສະດວກ, ອະພິສິດ ແລະ ການຄຸ້ມກັນ

### <u>ມາດຕາ 25</u>

### ວ່າດ້ວຍ ຂໍ້ ສະດວກ ສຳລັບ ສຳນັກງານ ກົງສຸນ

1). ລັດທີ່ຮັບຕ້ອງ ອຳນວຍຄວາມສະດວກຢ່າງເຕັມສ່ວນໃຫ້ແກ່ການປະຕິບັດໜ້າທີ່ການຂອງສຳນັກງານກົງສຸນ.

2). ລັດທີ່ຮັບ ຕ້ອງໃຫ້ກຽດສະມາຊິກ ສຳນັກງານກົງສຸນ ສົມກັບຖານະຂອງພວກກ່ຽວ, ແລະ ຕ້ອງເອົາມາດຕະການ ອັນເໝາະສົມທຸກຢ່າງເພື່ອຮັບປະກັນໃຫ້ ບັນດາ ສະມາຊິກສຳນັກງານກົງສຸນ ສາມາດປະຕິບັດໜ້າທີ່ການ ຂອງຕົນ ໄດ້ຢ່າງສະດວກດີ ແລະໄດ້ຮັບສິດ, ຂໍ້ສະດວກ, ອະພິສິດ ແລະ ການຄຸ້ມກັນ ດັ່ງທີ່ໄດ້ລະບຸ ໄວ້ໃນສົນທິສັນຍາ ສະບັບນີ້.

### <u>ມາດຕາ 26</u>

### ວ່າດ້ວຍການ ຮັບເອົາສະຖານທີ່ ແລະ ບ້ານພັກ ກົງສຸນ

1). ຕາມ ຂອບເຂດ ກົດໝາຍ ແລະ ລະບຽບການຂອງລັດທີ່ຮັບອະນຸຍາດ ໄວ້, ລັດທີ່ສົ່ງຫລືຕົວແທນ ຂອງຕົນຈະມີສິດ:

ກ. ຊື້, ເຊົ່າ ຫລື ໄດ້ມາດ້ວຍວິທີໃດ ວິທີໜຶ່ງເຄຫະ ຫລື ພາກສ່ວນຂອງເຄຫະ ແລະ ດິນບ້ານຂອງເຄຫະ ເພື່ອໃຊ້ເປັນສະຖານທີ່ກົງສຸນ ແລະ ບ້ານພັກຂອງສະມາຊິກ ສຳນັກງານກົງສຸນຍົກເວັ້ນ ບ້ານພັກຂອງ ສະມາຊິກຜູ້ທີ່ມີສັນຊາດຫລື ມີພູມລຳເນົາຖາວອນຂອງ ລັດທີ່ຮັບ;

ຂ. ກໍ່ສ້າງ ຫລື ດັດແປງ ເຄຫະສະຖານໃສ່ດິນ ທີ່ໄດ້ມາ.

2). ລັດທີ່ ຮັບ ຕ້ອງໃຫ້ການຊ່ວຍເຫລືອ ລັດທີ່ສົ່ງໃນການ ຊອກຫາສະຖານທີ່ກົງສຸນ, ໃນກໍລະນີ ທີ່ຕ້ອງການຄວນໃຫ້ ການຊ່ວຍເຫລືອລັດທີ່ສົ່ງ ເພື່ອຊອກຫາເຮືອນພັກອັນເໝາະສົມ ໃຫ້ບັນດາສະມາຊິກສຳນັກງານກົງສຸນ.

3). ໃນການປະຕິບັດບັນດາສິດຂອງຕົນ ທີ່ໄດ້ບົ່ງໃນວັກ 1 ຂອງມາດຕານີ້

ລັດທີ່ສົ່ງ ຫລື ຕົວແທນຂອງຕົນ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຂອງ ລັດທີ່ຮັບ ທີ່ກ່ຽວກັບດິນ, ການກໍ່ສ້າງ ແລະ ຜັງເມືອງ.

<u>ມາດຕາ 27</u>

ວ່າດ້ວຍການນຳໃຊ້ທຸງຊາດແລະເຄື່ອງໝາຍຊາດ

1). ລັດທີ່ສົ່ງມີສິດໃຊ້ເຄື່ອງໝາຍປະຈຳຊາດຂອງຕົນໃສ່ສະຖານທີ່ກົງສຸນ ແລະ ໃສ່ປ້າຍສຳນັກງານກົງສຸນ ເປັນພາສາຂອງລັດທີ່ສົ່ງ ແລະ ພາສາ ລັດທີ່ຮັບ.

2). ລັດທີ່ສົ່ງມີສິດ ຕິດທຸງຊາດ ຂອງຕົນໃສ່ສຳນັກງານກົງສຸນ ໃສ່ບ້ານພັກຫົວໜ້າສຳນັກງານກົງສຸນ ແລະ ໃສ່ຍານພາຫະນະ ທີ່ໃຊ້ໃນການປະຕິບັດໜ້າທີ່ ທາງ ການ ຂອງຕົນ.

<u>ມາດຕາ 28</u>

ວ່າດ້ວຍການ ຫ້າມລ່ວງລະເມີດ ສະຖານທີ່ກົງສຸນ
ແລະ ບ້ານພັກລັດຖະກອນກົງສຸນ

1). ສະຖານທີ່ກົງສຸນ ແລະ ບ້ານພັກ ຂອງລັດຖະກອນກົງສຸນ ຈະຖືກລະເມີດບໍ່ໄດ້. ບັນດາເຈົ້າໜ້າທີ່ ຂອງລັດທີ່ຮັບບໍ່ໃຫ້ເຂົ້າ ໄປສະຖານທີ່ກົງສຸນ ແລະ ບ້ານພັກຂອງ ລັດຖະກອນກົງສຸນ ໂດຍບໍ່ໄດ້ຮັບຄວາມເຫັນດີ ເຫັນພ້ອມ ຂອງຫົວໜ້າສຳນັກງານກົງສຸນ ຫລືຫົວໜ້າ ຂອງສະຖານທູດ ຂອງລັດທີ່ສົ່ງຢູ່ໃນລັດທີ່ຮັບ ຫລືບຸກຄົນທີ່ ຖືກແຕ່ງຕັ້ງ ໂດຍຜູ້ໃດ ຜູ້ໜຶ່ງໃນຈຳນວນນັ້ນ.

2). ລັດທີ່ຮັບ ຈະຕ້ອງໃຊ້ມາດຕະການ ທີ່ຈຳເປັນທຸກຢ່າງ ເພື່ອປົກປັກຮັກສາ ສະຖານທີ່ກົງສຸນ ແລະ ບ້ານພັກ ຂອງລັດຖະກອນກົງສຸນ ຕ້ານການບຸກລຸກ ຫລື ກໍ່ຄວາມເສັຽຫາຍ ແລະ ສະກັດກັ້ນ ການກໍ່ກວນຄວາມສະຫງົບ ຂອງ ສຳນັກງານກົງສຸນ ຫລື ທຳລາຍກຽດ ສັກສີ ຂອງສະຖານທີ່ ກົງສຸນ.

## ມາດຕາ 29

### ວ່າດ້ວຍການຄຸ້ມກັນ ຈາກ ການ ເກັບເກນສະຖານທີ່ກົງສຸນ

ສະຖານທີ່ກົງສຸນ, ເຄື່ອງປະກອບສໍານັກງານ ຊັບສົມບັດ ພ້ອມ ດ້ວຍຍານພາຫະນະຂົນສົ່ງ ຂອງສໍານັກງານກົງສຸນ ຈະຖືກຄຸ້ມກັນ ແລະ ຖືກຍົກເວັ້ນຈາກການ ເກັບເກນບໍ່ວ່າໃນ ຮູບການໃດກໍ່ຕາມ.

## ມາດຕາ 30

### ວ່າດ້ວຍການ ຫ້າມລ່ວງລະເມີດ ບັນນະສານກົງສຸນ

ບັນນະສານກົງສຸນ ຈະຖືກລ່ວງລະເມີດບໍ່ໄດ້ໃນທຸກໂອກາດ ແລະ ບໍ່ວ່າຢູ່ບ່ອນໃດ.

## ມາດຕາ 31

### ວ່າດ້ວຍ ເສລີພາບໃນການຕິດຕໍ່

1). ລັດທີ່ຮັບ ຄວນອະນຸຍາດ ແລະ ໃຫ້ການປົກປັກຮັກສາ ແກ່ເສລີພາບໃນການຕິດຕໍ່ ຂອງສໍານັກງານກົງສຸນ ທີ່ມີຈຸດປະສົງ ທາງການທຸກຊະນິດ. ການຕິດຕໍ່ກັບລັດຖະບານ, ສະຖານທູດ ແລະ ກັບສໍານັກງານກົງສຸນ ອື່ນໆຂອງລັດ ທີ່ສົ່ງ, ສໍານັກງານກົງສຸນ ສາມາດນໍາໃຊ້ ທຸກພາຫານະຕິດຕໍ່ທີ່ເໝາະສົມ, ລວມທັງການໃຊ້ ສານເປັນກົດລັບ ຫລື ເປັນຕົວເລກ, ຜູ້ສົ່ງໜັງສືການທູດ ຫລື ຜູ້ສົ່ງໜັງສືກົງສຸນ, ຖົງເມການທູດ ຫລື ຖົງເມກົງສຸນ, ແຕ່ ສໍານັກງານກົງສຸນ ຈະຕິດຕັ້ງ ແລະ ໃຊ້ເຄື່ອງ ວິທະຍຸ ໄດ້ກໍ່ຕໍ່ເມື່ອໄດ້ຮັບຄວາມເຫັນດີ ເຫັນພ້ອມ ຈາກລັດທີ່ຮັບເສັຽກ່ອນ.

2). ຈົດໝາຍທາງການຂອງ ສໍານັກງານກົງສຸນ ຈະຖືກລະເມີດບໍ່ໄດ້. ຖົງເມກົງສຸນຈະຖືກໄຂ ຫລື ກັກໄວ້ບໍ່ໄດ້. ຖົງເມກົງສຸນ ຕ້ອງມີເຄື່ອງໝາຍບອກ ປະເພດຢ່າງຈະແຈ້ງ ແລະ ຕ້ອງບັນຈຸແຕ່ ຈົດໝາຍທາງການ ກໍ່ຄືບັນດາເອກະສານ ແລະ ສິ່ງຂອງ ທີ່ຈະນໍາເອົາໄປໃຊ້ ສະເພາະ ແຕ່ໃນວຽກງານ ທາງການເທົ່ານັ້ນ.

3). ຜູ້ສົ່ງໜັງສືກົງສຸນ ຈະຕ້ອງແມ່ນບຸກຄົນທີ່ຖືສັນຊາດ ຂອງລັດທີ່ສົ່ງ ທີ່ບໍ່ມີພູມລໍາເນົາ ອັນຖາວອນຢູ່ໃນລັດທີ່ຮັບ. ຜູ້ສົ່ງໜັງສືກົງສຸນ ຕ້ອງມີເອກະສານທາງການ ທີ່ຢັ້ງຢືນເຖິງຖານະ ຂອງຜູ້ກ່ຽວ. ຜູ້ສົ່ງໜັງສືກົງສຸນ ໄດ້ຮັບສິດ, ຂໍ້ສະດວກ,

ອະພິສິດ ແລະ ການຄຸ້ມກັນ ເໝືອນກັນກັບຜູ້ສົ່ງ ໜັງສືການທູດ ໃນເວລາທີ່ຢູ່ໃນດິນແດນ ຂອງລັດທີ່ຮັບ.

4). ຖົງເມ ກົງສຸນ ອາດຈະຖືກມອບໃຫ້ ຫົວໜ້າຍົນເຫາະ ລຳໃດລຳໜຶ່ງ ຫລືຫົວໜ້າກຳປັ່ນ ລຳໃດ ລຳໜຶ່ງ ຂອງລັດທີ່ສົ່ງ. ແຕ່ຫົວໜ້າຍົນເຫາະ ຫລືຫົວໜ້າກຳປັ່ນດັ່ງກ່າວ ຕ້ອງມີເອກະສານ ທາງການທີ່ແຈ້ງ ຈຳນວນຫີບຫໍ່ ທີ່ປະກອບ ເປັນຖົງເມກົງສູນ. ແຕ່ເຖິງຢ່າງໃດກໍດີ ຈະຖືວ່າຜູ້ກ່ຽວເປັນ ຜູ້ສົ່ງໜັງສືກົງສຸນບໍ່ໄດ້. ຜ່ານການຕົກລົງເຫັນດີ ຈາກເຈົ້າໜ້າທີ່ ກ່ຽວຂ້ອງຂອງລັດທີ່ຮັບ, ສະມາຊິກສຳນັກງານກົງສຸນຜູ້ໃດຜູ້ໜຶ່ງສາມາດໄປຮັບ ເອົາຫລືມອບສົ່ງຖົງເມກົງສຸນກັບມື ຂອງຫົວໜ້າຍົນເຫາະຫລືຫົວໜ້າກຳປັ່ນໄດ້ໂດຍກົງ ແລະ ເສລີ.

<u>ມາດຕາ 32</u>

ວ່າດ້ວຍຄ່າທຳນຽມ ກົງສຸນ ແລະ ຄ່າເກັບອື່ນໆ

1). ຢູ່ໃນດິນແດນ ຂອງລັດທີ່ຮັບ ສຳນັກງານກົງສຸນ ສາມາດເກັບຄ່າທຳນຽມກົງສຸນ ແລະ ເກັບຄ່າອື່ນໆເພື່ອການດຳເນີນງານ ຂອງກົງສຸນຕາມກົດໝາຍ ແລະ ລະບຽບການຂອງລັດທີ່ສົ່ງ.

2). ຄ່າທຳນຽມກົງສຸນ ແລະ ຄ່າເກັບຕ່າງໆທີ່ໄດ້ກ່າວໄວ້ໃນວັກ (1) ຂອງມາດຕານີ້ ແລະ ໃບຮັບເງິນກ່ຽວຂ້ອງຈະຖືກຍົກເວັ້ນ ພາສີອາກອນທັງໝົດ ຂອງລັດ ທີ່ຮັບ.

3). ລັດທີ່ຮັບຈະອະນຸຍາດ ໃຫ້ສຳນັກງານກົງສຸນສົ່ງເງິນ ລາຍຮັບ ຈາກການເກັບຄ່າທຳນຽມກົງສຸນ ແລະ ຄ່າເກັບຕ່າງໆ ດັ່ງທີ່ກ່າວໄວ້ ໃນວັກ ທີ 1 ຂອງ ມາດຕານີ້ໄປຍັງລັດທີ່ສົ່ງໄດ້.

<u>ມາດຕາ33</u>

ເສລີພາບໃນການໄປມາ

ບັນດາສະມາຊິກສຳນັກງານກົງສຸນຈະໄດ້ຮັບເສລີພາບການໄປມາແລະການເດີນທາງໄປມາ ໃນລັດນັ້ນໄດ້ ແມ່ນຂຶ້ນກັບກົດໝາຍ ແລະ ລະບຽບການ ຂອງ ລັດທີ່ຮັບ ກ່ຽວກັບການ ເຂົ້າໄປເຂດຕ່າງໆ ທີ່ຖືກຫ້າມຫລືຈຳກັດ.

<u>ມາດຕາ 34</u>

ວ່າດ້ວຍການ ບໍ່ໃຫ້ແຕະຕ້ອງ

ຮ່າງກາຍຂອງລັດຖະກອນກົງສຸນ

ຕົວບຸກຄົນ ຂອງລັດຖະກອນກົງສຸນ ຈະຖືກລະເມີດບໍ່ໄດ້ ແລະ ພວກເຂົາ ຈະຖືກຈັບກຸມ ຄຸມຂັງບໍ່ໄດ້. ລັດທີ່ຮັບຕ້ອງເອົາມາດຕະການ ອັນເໝາະສົມ ເພື່ອກີດກັ້ນການແຕະຕ້ອງ ເຖິງສິດເສລີພາບ ແລະ ກຽດສັກສີ ຂອງ ບຸກຄົນ.

<u>ມາດຕາ 35</u>

ວ່າດ້ວຍການຄຸ້ມກັນ ຈາກການຕ້ອງຄະດີ

1). ລັດຖະກອນກົງສຸນ ຈະຖືກຍົກເວັ້ນຈາກການຕ້ອງຄະດີ ຫລື ຄະດີປົກຄອງຂອງລັດທີ່ຮັບ ເວັ້ນເສຍແຕ່ ຄະດີແພ່ງ:

ກ. ການກ່າວຟ້ອງທີ່ເກີດ ຂື້ນ ຈາກສັນຍາທີ່ ເຊັນໂດຍ ລັດຖະກອນ ກົງສຸນ ໃນນັ້ນສັນຍາ ກໍບໍ່ໄດ້ບອກແຈ້ງວ່າເປັນຕົວແທນ ຂອງລັດ ທີ່ສົ່ງ;

ຂ. ການກ່າວຟ້ອງ ໂດຍຝ່າຍທີ່ສາມເພື່ອທວງເອົາຄ່າເສັຽຫາຍຈາກອຸປະຕິເຫດ ທີ່ເກີດຂື້ນ ຈາກລົດ, ຍົນເຫາະ, ກຳປັ່ນ ຢູ່ພາຍໃນ ລັດທີ່ຮັບ;

ຄ. ການກ່າວຟ້ອງ ກ່ຽວກັບຊັບສິນ ອະສັງຫາລິມະຊັບ ສ່ວນຕົວໃນດິນແດນ ລັດທີ່ຮັບ, ນອກຈາກວ່າ ລັດຖະກອນກົງສຸນ ໄດ້ເປັນ ເຈົ້າຂອງໃນຖານະ ຜູ້ຕາງໜ້າ ຂອງລັດທີ່ສົ່ງ ແລະ ເພື່ອເປົ້າໝາຍ ໃຊ້ສຳລັບ ສຳນັກງານກົງສຸນ;

ງ. ການກ່າວຟ້ອງທີ່ກ່ຽວກັບການສືບທອດ ມໍລະດົກສ່ວນຕົວ;

ຈ. ການກ່າວຟ້ອງ ທີ່ເກີດຂື້ນ ຈາກ ກິດຈະການ ດ້ານວິຊາຊີບ ຫລື ດ້ານການຄ້າ ຢ່າງໃດ ຢ່າງໜຶ່ງ ຊຶ່ງລັດຖະກອນກົງສຸນໄດ້ ປະກອບ ພາຍໃນ ລັດທີ່ຮັບ ນອກຈາກໜ້າທີ່ທາງການຂອງຕົນ.

2). ລັດທີ່ຮັບ ຈະບໍ່ສາມາດໃຊ້ ມາດຕະການ ຕໍ່ລັດຖະກອນກົງສຸນ ຍົກເວັ້ນໃນຄະດີຕ່າງໆທີ່ກ່າວໄວ້ຢູ່ໃນວັກ 1 ຂອງມາດຕານີ້ ຖ້າໃນກໍລະນີນຳໃຊ້ມາດຕະການ ໃນຄະດີ ດັ່ງກ່າວ ນັ້ນ ຫ້າມແຕະຕ້ອງເຖິງຕົວບຸກຄົນ ແລະ ບ້ານພັກຂອງລັດຖະກອນກົງ

ສຸມ ຈະຖືກທຳລາຍບໍ່ໄດ້.

3). ພະນັກງານ ບໍລິຫານ ແລະ ເຕັກນິກພ້ອມທັງ ຄົນຮັບໃຊ້ ຂອງສຳນັກງານກົງສຸນ ຈະຖືກຍົກເວັ້ນ ຈາກຄະດີ ຂອງເຈົ້າໜ້າທີ່ ທາງກົດໝາຍ ຫລື ການປົກຄອງ ຂອງລັດ ທີ່ຮັບ ກ່ຽວກັບການ ດຳເນີນງານ ໃດໜຶ່ງ ໃນການປະຕິບັດ ໜ້າທີ່ ຂອງເຂົາເຈົ້າ ຍົກເວັ້ນ ຄະດີແພ່ງ ທີ່ໄດ້ກ່າວໄວ້ ຢູ່ໃນຂໍ້ (ກ) (ຂ) ຂອງວັກໜຶ່ງ (1) ຂອງ ມາດຕານີ້.

## ມາດຕາ 36

### ວ່າດ້ວຍການເປັນພະຍານ

1). ລັດຖະກອນ ກົງສຸນ ບໍ່ມີຄວາມຈຳເປັນໃຫ້ການເປັນພະຍານ.

2). ພະນັກງານ ບໍລິຫານ ແລະ ເຕັກນິກ ຫລື ຄົນຮັບໃຊ້ ຂອງສຳນັກງານກົງສຸນ ອາດຈະຖືກ ຮຽກຕົວ ມາໃຫ້ການ ການເປັນພະຍານ ໃນໄລຍະການກ່າວຟ້ອງ ທາງກົດໝາຍ ຫລື ດ້ານການປົກຄອງ ຂອງລັດທີ່ຮັບ ເຂົາຈະປະຕິເສດມາໃຫ້ການ ການເປັນພະຍານບໍ່ໄດ້ ຍົກເວັ້ນ ໃນຄະດີ ທີ່ບົ່ງໄວ້ ໃນວັກ 3 ຂອງມາດຕານີ້.

3). ພະນັກງານ ບໍລິຫານ ແລະ ເຕັກນິກ ແລະ ຄົນຮັບໃຊ້ຂອງສຳນັກງານກົງສຸນ ບໍ່ມີຄວາມຈຳເປັນໃຫ້ການ ເປັນພະຍານ ກ່ຽວກັບບັນຫາຕ່າງໆ ທີ່ພົວພັນເຖິງການປະຕິບັດ ໜ້າທີ່ຂອງຕົນ ຫລື ອອກຈົດໝາຍທາງການ ອັນໃດ ອັນໜຶ່ງ ຫລື ເອກະສານ ທີ່ກ່ຽວ ຂ້ອງເຖິງ. ເຂົາເຈົ້າມີ ສິດປະຕິເສດຕໍ່ການ ເປັນພະຍານ ທີ່ພົວພັນ ເຖິງກົດໝາຍ ຂອງລັດທີ່ສົ່ງ.

4). ເຈົ້າໜ້າທີ່ ກ່ຽວຂ້ອງ ລັດທີ່ຮັບ ທີ່ຕ້ອງການຄຳໃຫ້ການ ຂອງພະນັກງານ ບໍລິຫານ ແລະ ເຕັກນິກ ຫລື ຄົນຮັບໃຊ້ຂອງສຳນັກງານກົງສຸນ ຕ້ອງຫລີກເວັ້ນ ການເຂົ້າແຊກແຊງ ການປະຕິບັດໜ້າທີ່ ຂອງເຂົາເຈົ້າ. ໃນເມື່ອເປັນໄປໄດ້ ເຂົາເຈົ້າອາດ ຈະໄດ້ຮັບຄຳໃຫ້ການດັ່ງກ່າວນັ້ນ ຢູ່ທີ່ບ້ານພັກ ຫລື ຢູ່ທີ່ສຳນັກງານກົງສຸນ ຫລືວ່າຮັບເອົາຄຳໃຫ້ການ ຈາກຜູ້ກ່ຽວ ເປັນລາຍລັກອັກສອນ.

## ມາດຕາ 37

### ວ່າດ້ວຍການ ຍົກເວັ້ນການຮັບໃຊ້ ແລະ ພັນທະຕ່າງໆ

1). ສະມາຊິກ ສໍານັກງານກົງສຸນ ຈະຖືກຍົກເວັ້ນ ຈາກພັນທະ ຮັບໃຊ້ ສ່ວນຕົວ ແລະ ພັນທະຮັບໃຊ້ທົ່ວໄປ ແລະ ພັນທະເປັນທະຫານ ຊະນິດໃດຊະນິດໜຶ່ງຢູ່ໃນລັດທີ່ຮັບ.

2). ລັດຖະກອນ ກົງສຸນ ແລະ ພະນັກງານ ບໍລິຫານ ແລະເຕັກນິກ ຂອງ ສໍານັກງານ ກົງສຸນ ຈະຖືກຍົກເວັ້ນ ຈາກພັນທະທັງໝົດພາຍໃຕ້ກົດໝາຍ ແລະ ລະບຽບການຂອງລັດທີ່ຮັບ ກ່ຽວກັບການຂຶ້ນທະບຽນຊາວຕ່າງດ້າວ ແລະ ອະນຸຍາດໃຫ້ພັກເຊົາ.

## ມາດຕາ 38

### ວ່າດ້ວຍການຍົກເວັ້ນ ພາສີຊັບສິນ

1).ລັດທີ່ຮັບໃຫ້ການຍົກເວັ້ນທຸກການເສັຽພາສີອາກອນດັ່ງລຸ່ມນີ້:

ກ. ສະຖານທີ່ກົງສຸນ ແລະ ບ້ານພັກ ຂອງບັນດາສະມາຊິກ ສໍານັກງານກົງສຸນ ທີ່ໄດ້ມາໃນນາມຂອງລັດທີ່ສົ່ງຫລືຕົວແທນ ຂອງຕົນເພື່ອເປົ້າໝາຍທາງການ;

ຂ. ເຄື່ອງປະກອບກົງສຸນ ແລະ ຍານພາຫະນະຂົນສົ່ງ ທີ່ໄດ້ມາ ເພື່ອຈຸດປະສົງທາງການ ລວມທັງການໄດ້ມາ ການເປັນເຈົ້າຂອງ ຫລື ການບໍາລຸງຮັກສາອີກດ້ວຍ. .

2). ຂໍ້ກໍານົດ ໃນວັກ 1 ຂອງ ມາດຕາ ນີ້ຈະບໍ່ໃຊ້ ໃນກໍລະນີດັ່ງລຸ່ມນີ້:

ກ. ການເກັບຄ່າ ສໍາລັບການບໍລິການສະເພາະ;

ຂ. ການເກັບ ສວຍສາອາກອນ ພາຍໃຕ້ກົດໝາຍ ແລະ ລະບຽບການຂອງລັດທີ່ຮັບ ຈາກບຸກຄົນ ຜູ້ທີ່ໄດ້ເຊັນສັນຍາ ກັບລັດທີ່ສົ່ງ ຫລືກັບຕົວແທນ ຂອງລັດທີ່ສົ່ງ.

<u>ມາດຕາ 39</u>

ວ່າດ້ວຍການຍົກເວັ້ນພາສີ

ບັນດາສະມາຊິກສຳນັກງານກົງສຸນ

1). ບັນດາ ລັດຖະກອນ ກົງສຸນ ແລະ ບັນດາພະນັກງານບໍລິຫານແລະ ເຕັກນິກ ຂອງສຳນັກງານກົງສຸນ ຈະຖືກຍົກເວັ້ນສ່ວຍສາອາກອນທັງໝົດ ໃນລະດັບຊາດລະດັບທ້ອງຖິ່ນ ຫລື ລະດັບເທດສະບານຂອງລັດທີ່ຮັບ, ຍົກເວັ້ນ:

ກ. ພາສີທາງອ້ອມ ຊະນິດໃດໜຶ່ງ ຊຶ່ງຕາມປົກກະຕິ ໄດ້ລວມເຂົ້າ ໃນລາຄາສິນຄ້າ ຫລື ຄ່າບໍລິການ;

ຂ. ສ່ວຍສາອາກອນຕ່າງໆ ຢູ່ໃນ ອະສັງຫາລິມະຊັບສ່ວນຕົວ ທີ່ຕັ້ງໃນດິນແດນຂອງລັດທີ່ຮັບ ແມ່ນ ຂຶ້ນກັບເງື່ອນໄຂ ໃນວັກໜຶ່ງ (1) ຂອງມາດຕາ(38 ) ໃນສົນທິສັນຍາສະບັບນີ້;

ຄ. ຄ່າທຳນຽມ ກ່ຽວກັບຊັບສົມບັດ ການສືບທອດມໍລະດົກ ແລະ ການໂອນຊັບສິນ, ເວັ້ນເສັຽແຕ່ ຈະເປັນໄປຕາມ ສິ່ງທີ່ໄດ້ກຳນົດ ໄວ້ ໃນມາດຕາ 43 ຂອງສົນທິສັນຍາ ສະບັບນີ້;

ງ. ສ່ວຍສາອາກອນ ຈາກລາຍໄດ້ສ່ວນຕົວ ນອກຈາກລາຍໄດ້ ທີ່ໄດ້ມາຈາກໜ້າທີ່ທາງການ ຂອງຕົນໃນລັດທີ່ຮັບ;

ຈ. ຄ່າທຳນຽມ ທີ່ ເກັບຈາກການໃຫ້ການບໍລິການສະເພາະ;

ສ. ຄ່າທຳນຽມ ການຂຶ້ນທະບຽນ,ຄ່າທຳນຽມສານ, ຫລືຄ່າທຳນຽມຈົດບັນທຶກ, ຄ່າທຳນຽມຂາຍຝາກ ແລະ ຄ່າທຳນຽມສະແຕມ, ແມ່ນ ຂຶ້ນກັບຂໍ້ ບັນຍັດ ໃນມາດຕາ 38 ຂອງສົນທິສັນຍາສະບັບນີ້.

2). ບັນດາ ຄົນຮັບໃຊ້ ຂອງ ສຳນັກງານ ກົງສຸນ ຈະຖືກຍົກເວັ້ນ ຊ່ວຍສາອາກອນຕ່າງໆ ໃນລັດທີ່ຮັບກ່ຽວກັບຄ່າແຮງງານ ຂອງເຂົາເຈົ້າ ຊຶ່ງພວກເຂົາ ເຈົ້າໄດ້ຮັບຈາກຄ່າບໍລິການຢູ່ ສຳນັກງານ ຍົກເວັ້ນໃນກໍລະນີຜູ້ທີ່ມີ ພູມລຳເນົາຖາວອນ ຫລື ຄົນທີ່ຖື

ສັນຊາດ ຂອງລັດທີ່ຮັບ.

## ມາດຕາ 40

## ວ່າດ້ວຍການຍົກເວັ້ນ ພາສີ ແລະ ການກວດກາ

1). ລັດທີ່ຮັບ ຈະອະນຸຍາດ ໃຫ້ນຳເຂົ້າ ແລະ ນຳອອກພ້ອມທັງ ຍົກເວັ້ນ ພາສີທັງໝົດໂດຍສອດຄ່ອງ ກັບກົດໝາຍ ແລະ ລະບຽບການຂອງຕົນ ນອກຈາກຄ່າຝາກສາງ, ຄ່າຂົນສົ່ງ ແລະ ຄ່າບໍລິການໃນລັກສະນະດຽວກັນຄື:

ກ. ບັນດາສິ່ງຂອງ ທີ່ໃຊ້ ທາງການຂອງ ສຳນັກງານກົງສຸນ;

ຂ. ບັນດາ ສິ່ງຂອງທີ່ໃຊ້ ສ່ວນຕົວ ຂອງລັດຖະກອນກົງສຸນ;

ຄ. ບັນດາ ສິ່ງຂອງທີ່ ສັ່ງເຂົ້າມາໃນເທື່ອທຳອິດ ເພື່ອໃຊ້ສ່ວນຕົວ ຂອງພະນັກງານບໍລິຫານ ແລະ ເຕັກນິກ ຂອງສຳນັກງານ ກົງສຸນລວມທັງ ເຄື່ອງໃຊ້ ຄົວເຮືອນເພື່ອໃຊ້ ໃນການຕັ້ງຄອບຄົວຂອງຕົນ.

2). ບັນດາ ສິ່ງຂອງທີ່ບົ່ງໄວ້ຢູ່ໃນ ຂໍ້ (ຂ) (ຄ) ໃນວັກ (1) ຂອງ ມາດຕາ ນີ້ຈະບໍ່ໃຫ້ເກີນ ຈຳນວນທີ່ຈຳເປັນ ເພື່ອໃຊ້ໂດຍບຸກຄົນ ກ່ຽວຂ້ອງເອງ.

3). ຫີບສ່ວນຕົວ ຂອງລັດຖະກອນກົງສຸນ ຈະຖືກຍົກເວັ້ນຈາກການກວດ ກາດ້ານພາສີ. ອາດຈະຖືກກວດກາໄດ້ ຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງລັດ ທີ່ຮັບນັ້ນ ຖ້າຫາກມີເຫດຜົນພຽງພໍ ທີ່ເຊື່ອວ່າມັນມີສິ່ງຂອງອື່ນໆບັນຈຸຢູ່ ນອກຈາກທີ່ໄດ້ບົ່ງ ໄວ້ໃນ ຂໍ້ (ຂ) ໃນວັກໜຶ່ງຂອງມາດຕານີ້, ຫລື ສິ່ງຂອງທີ່ສັ່ງເຂົ້າຫລື ສົ່ງອອກ ທີ່ຖືກຫວງ ຫ້າມໂດຍກົດໝາຍ ແລະ ລະບຽບການ ຂອງລັດທີ່ຮັບ ຫລື ຂັ້ນກັບກົດໝາຍແລະລະບຽບການ ດ້ານສາທາລະນະສຸກ. ການກວດກາ ດັ່ງກ່າວນັ້ນ ຕ້ອງປະຕິບັດໂດຍ ຊ່ອງໜ້າລັດຖະກອນກົງສຸນ ທີ່ກ່ຽວຂ້ອງ ຫລື ຕົວແທນຂອງຕົນ.

## ມາດຕາ 41

## ວ່າດ້ວຍອະພິສິດ ແລະ ການຄຸ້ມກັນ ຂອງສະມາຊິກຄອບຄົວ

ບັນດາ ສະມາຊິກຄອບຄົວ ຂອງລັດຖະກອນກົງສຸນ ແລະ ບັນດາສະມາຊິກຄອບຄົວ ຂອງພະນັກງານ ບໍລິຫານ ແລະ ເຕັກນິກຂອງສຳນັກງານກົງສຸນ ຈະໄດ້ຮັບ

ອະພິສິດ ແລະ ການຄຸ້ມກັນ ຕາມລໍາດັບ ຊຶ່ງລັດຖະກອນກົງສຸນ ແລະ ພະນັກງານບໍລິຫານ ແລະເຕັກນິກ ມີສິດໄດ້ຮັບຕາມລໍາດັບ ຢູ່ພາຍໄຕຂໍ້ກໍານົດ ຂອງສົນທິສັນຍາ ສະບັບນີ້, ບັນດາສະມາຊິກຄອບຄົວ ຂອງຄົນຮັບໃຊ້ ຂອງສໍານັກງານກົງສຸນ ຈະໄດ້ຮັບ ອະພິສິດ ແລະ ການຄຸ້ມກັນ ຊຶ່ງຄົນໃຊ້ມີສິດໄດ້ຮັບພາຍໄຕ້ວັກ (1) ຂອງມາດຕາ (37) ໃນສົນທິສັນຍາສະບັບນີ້, ຍົກເວັ້ນບຸກຄົນທີ່ຖືສັນຊາດ ຫລື ມີພູມລໍາເນົາຖາວອນ ໃນລັດ ທີ່ຮັບ ຫລື ຜູ້ທີ່ປະກອບອາຊີບຫາລາຍໄດ້ ສ່ວນຕົວໃດໜຶ່ງ ຢູ່ໃນລັດທີ່ຮັບ.

## ມາດຕາ 42

### ວ່າດ້ວຍ ບຸກຄົນ ທີ່ບໍ່ໄດ້ຮັບອະພິສິດ ແລະ ການຄຸ້ມກັນ

1). ພະນັກງານບໍລິຫານ ແລະເຕັກນິກຂອງສໍານັກງານກົງສຸນ ແລະ ຄົນຮັບໃຊ້ ສໍານັກ ງານກົງສຸນ ທີ່ເປັນບຸກຄົນ ຖືສັນຊາດຂອງລັດທີ່ຮັບ ຫລື ມີພູມລໍາ ເນົາຖາວອນ ຢູ່ໃນລັດທີ່ຮັບຈະບໍ່ໄດ້ຮັບອະພິສິດ ແລະ ການຄຸ້ມກັນ ທີ່ໄດ້ກໍານົດໄວ້ ໃນສົນທິສັນຍາ ສະບັບນີ້, ເວັ້ນເສັຽແຕ່ຈະເປັນໄປຕາມສິ່ງທີ່ໄດ້ກໍານົດໄວ້ໃນວັກ (3) ໃນມາດຕາ (36) ຂອງສົນທິສັນຍາ ສະບັບນີ້.

2). ສະມາຊິກ ຄອບຄົວ ຂອງບຸກຄົນ ທີ່ໄດ້ກ່າວໃນວັກ (1) ຂອງມາດຕາ ນີ້ ຈະບໍ່ໄດ້ຮັບ ອະພິສິດ ແລະ ການຄຸ້ມກັນ ດັ່ງທີ່ໄດ້ບົ່ງໄວ້ໃນສົນທິສັນຍາ ສະບັບນີ້.

## ມາດຕາ 43

### ວ່າດ້ວຍ ມໍລະດົກ ຂອງສະມາຊິກສໍານັກງານກົງສຸນ

ໃນກໍລະນີ ທີ່ມີ ການເສັຽຊີວິດຂອງ ສະມາຊິກສໍານັກງານ ກົງສຸນ ຜູ້ໃດຜູ້ໜຶ່ງ ຫລື ສະມາຊິກ ຄອບຄົວຜູ້ໃດ ຜູ້ໜຶ່ງ ຂອງຜູ້ກ່ຽວ, ລັດທີ່ຮັບ:

ກ). ຕ້ອງອະນຸຍາດ ໃຫ້ນໍາເອົາອອກ ສັງຫາລິມະຊັບຂອງຜູ້ເສັຽຊີວິດອອກນອກ ປະເທດໄດ້, ຍົກເວັ້ນຊັບສົມບັດ ດັ່ງກ່າວອັນໃດອັນໜຶ່ງ ຂອງຜູ້ເສັຽຊີວິດ ທີ່ຫາມາໄດ້ຢູ່ ໃນດິນແດນ ຂອງລັດທີ່ຮັບ ຊຶ່ງຖືກຫ້າມບໍ່ໃຫ້ເອົາອອກນອກປະເທດ ໃນເວລາມີ ການ ເສັຽຊີວິດນັ້ນ,

2). ຍົກເວັ້ນການເກັບຄ່າ ທຳນຽມຈາກ ມໍລະດົກ ແລະ ທຸກການເສັຽສ່ວຍ ອາກອນ ຈາກສັງຫາລິມະຊັບ ຂອງຜູ້ເສັຽຊີວິດ.

## ມາດຕາ 44

## ວ່າດ້ວຍການເລີ່ມຕົ້ນ ແລະ ການສິ້ນສຸດຂອງອະພິສິດ ແລະ ການ ຄຸ້ມກັນ

1). ທຸກໆຄົນ ສະມາຊິກ ສຳນັກງານ ກົງສຸນ ຈະໄດ້ຮັບ ອະພິສິດແລະ ການຄຸ້ມກັນ, ທີ່ໄດ້ບົ່ງໄວ້ໃນສົນທິສັນຍາ ສະບັບນີ້ ນັບແຕ່ເວລາ ທີ່ຜູ້ກ່ຽວເຂົ້າໄປດິນແດນຂອງລັດທີ່ຮັບ ເພື່ອໄປຮັບໜ້າທີ່ ຫລື ຖ້າຫາກຜູ້ກ່ຽວໄດ້ຢູ່ໃນດິນແດນ ຂອງລັດທີ່ຮັບ ກ່ອນແລ້ວ ໃຫ້ນັບແຕ່ເວລາທີ່ຜູ້ກ່ຽວ ເຂົ້າປະຕິບັດ ໜ້າທີ່ຂອງຕົນ ຢູ່ສຳນັກງານກົງສຸນ.

2). ບັນດາສະມາຊິກຄອບຄົວ ຂອງສະມາຊິກສຳນັກງານກົງສຸນຈະໄດ້ຮັບອະພິສິດ ແລະ ການຄຸ້ມກັນດັ່ງທີ່ ໄດ້ບົ່ງໄວ້ໃນສົນທິສັນຍາ ສະບັບນີ້ນັບແຕ່ວັນທີ່ ທີ່ສະມາຊິກ ສຳນັກງານກົງສຸນ ຜູ້ນັ້ນໄດ້ຮັບ ອະພິສິດແລະການຄຸ້ມກັນຫລືນັບແຕ່ເວລາຜູ້ກ່ຽວ ເຂົ້າໄປໃນດິນແດນຂອງລັດທີ່ຮັບຫລືນັບແຕ່ ວັນທີ່ ທີ່ຜູ້ກ່ຽວກາຍເປັນສະມາຊິກຄອບຄົວໃນກໍລະນີ ທີ່ຜູ້ກ່ຽວໄດ້ເຂົ້າເປັນ ສະມາຊິກຄອບຄົວ ຕາມພາຍຫລັງ, ຜູ້ກ່ຽວຈະໄດ້ຮັບອະພິສິດ ແລະ ການຄຸ້ມກັນ.

3). ເມື່ອໃດໜ້າທີ່ການ ຂອງສະມາຊິກສຳນັກງານກົງສຸນ ໄດ້ສິ້ນສຸດລົງ ແລ້ວອະພິສິດ ແລະ ການຄຸ້ມກັນ ລວມທັງສະມາຊິກຄອບຄົວ ຂອງຜູ້ກ່ຽວກໍ່ສິ້ນສຸດລົງໃນເວລາທີ່ຜູ້ກ່ຽວ ອອກຈາກລັດທີ່ຮັບໄປ ຫລື ກາຍກຳນົດເວລາ ອັນສົມເຫດສົມຜົນ ທີ່ຕ້ອງການເພື່ອອອກໄປນັ້ນ. ອະພິສິດ ແລະ ການຄຸ້ມກັນ ຂອງບັນດາສະມາຊິກຄອບຄົວຂອງສະມາຊິກສຳນັກງານກົງສຸນ ຈະສິ້ນສຸດລົງໃນເວລາທີ່ ຜູ້ກ່ຽວເຊົາເປັນ ສະມາຊິກຄອບຄົວດັ່ງກ່າວນັ້ນ. ເຖິງຢ່າງໃດກໍ່ຕາມ ຖ້າຫາກບຸກຄົນ ດັ່ງກ່າວນັ້ນ ມີເຈດ ຕະນາຢາກອອກຈາກລັດທີ່ຮັບ ພາຍໃນໄລຍະເວລາ ທີ່ສົມເຫດ ສົມຜົນ ຈາກນັ້ນອະ ພິສິດ ແລະ ການຄຸ້ມກັນ ຈະໄດ້ສິ້ນສຸດລົງ ໃນເວລາທີ່ ຜູ້ກ່ຽວເດີນທາງ ອອກໄປ.

4). ໃນກໍລະນີການເສັຽຊີວິດຂອງສະມາຊິກສຳນັກງານກົງສຸນບັນດາສະມາຊິກຄອບ

ຄືວ ຂອງຜູ້ກົງວຈະສືບຕໍ່ໄດ້ຮັບ ອະພິສິດ ແລະ ການຄຸ້ມກັນທີ່ໄດ້ ໃຫ້ແກ່ຜູ້ກົງວ ແລ້ວ ຈົນກວ່າ ຜູ້ກົງວເດີນທາງອອກ ຈາກລັດທີ່ຮັບ ຫລື ຈົນກ່ວາໄລຍະເວລາທີ່ ສົມເຫດ ສົມຜົນ ໄດ້ສິ້ນສຸດລົງ.

<u>ມາດຕາ 45</u>

ວ່າດ້ວຍການ ສະຫລະອະພິສິດ ແລະ ການຄຸ້ມກັນ

1). ລັດທີ່ສົ່ງ ອາດບອກສະຫລະອະພິສິດ ແລະ ການຄຸ້ມກັນອັນໃດອັນໜຶ່ງ ຂອງບຸກຄົນ ກົງວ ຂອງທີ່ໄດ້ຮັບໂດຍ ອາໃສອໍານາດແຫ່ງມາດຕາ 35 ແລະ ມາດຕາ 36 ຂອງສົນທິສັນຍາສະບັບນີ້. ການບອກສະຫລະ ດັ່ງກ່າວຕ້ອງເຮັດຢ່າງຈະແຈ້ງໃນທຸກ ກໍລະນີ ແລະຈະຕ້ອງສົ່ງໃຫ້ ລັດທີ່ຮັບ ເປັນລາຍລັກອັກສອນ.

2). ການຟ້ອງຮ້ອງ ຂອງບຸກຄົນຜູ້ໃດ ຜູ້ໜຶ່ງ ທີ່ໄດ້ຮັບການຄຸ້ມກັນ ຈາກການ ຕ້ອງຄະດີ ພາຍໃຕ້ສົນທິສັນຍາສະບັບນີ້ ຈະຍົກເວັ້ນຈາກການຮ້ຽກເອົາການຄຸ້ມກັນ ນັ້ນອີກ ຕໍ່ທຸກໆການຟ້ອງຮ້ອງຄືນ ທີ່ມີສ່ວນພົວພັນໂດຍກົງ ກັບການຟ້ອງຮ້ອງໃນເບື້ອງ ຕົ້ນນັ້ນ.

3). ການສະຫລະ ການຄຸ້ມກັນ ຈາກການຕ້ອງຄະດີ ກ່ຽວກັບຄະດີແພ່ງ ຫລື ຄະດີປົກຄອງ ຈະບໍ່ໝາຍຄວາມວ່າ ຜູ້ກົງວສະລະສິດຄຸ້ມກັນ ຈາກຄໍາຕັດສິນດ້ານ ກົດ ໝາຍ ໄປໃນຕົວ, ການສະຫລະ ການຄຸ້ມກັນຕໍ່ການຕັດສິນທາງກົດໝາຍຈໍາເປັນຕ້ອງ ໄດ້ແຈ້ງ ເປັນລາຍລັກອັກສອນ ຕ່າງຫາກອີກ.

<u>ພາກທີ່ ຫ້າ</u>

ວ່າດ້ວຍ ຂໍ້ບັນຍັດທົ່ວໄປ

<u>ມາດຕາ 46</u>

ວ່າດ້ວຍການເຄົາລົບກົດໝາຍ ແລະ ລະບຽບການຂອງ ລັດທີ່ຮັບ

1). ໃນເມື່ອບໍ່ມີການແຕະຕ້ອງເຖິງອະພິສິດ ແລະ ການຄຸ້ມກັນຕ່າງໆ ຂອງເຂົາ ເຈົ້າແລ້ວ ແມ່ນໜ້າທີ່ຂອງໝົດທຸກຄົນ ທີ່ໄດ້ຮັບອະພິສິດ ແລະ ການຄຸ້ມກັນ ຕາມທີ່ໄດ້ ບົ່ງໄວ້ ໃນສົນທິສັນຍາສະບັບນີ້ ທີ່ຈະຕ້ອງ ເຄົາລົບນັບຖືກົດໝາຍ ແລະ ລະບຽບການ

ຕ່າງໆ ຂອງລັດທີ່ຮັບ. ລວມທັງສິ່ງທີ່ກ່ຽວກັບ ການຄອບຄຸມ ການຈາລະຈອນພ້ອມດຽວກັນ ກໍ່ມີໜ້າທີ່ບໍ່ແຊກແຊງ ເຂົ້າວຽກງານພາຍໃນ ຂອງລັດທີ່ຮັບ.

2). ສະຖານທີ່ ກົງສຸນຈະບໍ່ຖືກນຳໃຊ້ ເພື່ອຈຸດປະສົງໃດໜຶ່ງ ທີ່ບໍ່ສອດຄ່ອງກັບການປະຕິບັດໜ້າທີ່ ຂອງກົງສຸນ.

3). ສຳນັກງານກົງສຸນ ບັນດາສະມາຊິກ ສຳນັກງານກົງສຸນ ແລະ ບັນດາສະມາຊິກ ຄອບຄົວຂອງເຂົາເຈົ້າ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຂອງລັດທີ່ຮັບ ຊຶ່ງກ່ຽວຂ້ອງເຖິງ ການປະກັນໄພ ພາຫະນະຂົນສົ່ງ.

4). ບັນດາສະມາຊິກ ສຳນັກງານກົງສຸນ ຜູ້ທີ່ຖືກສົ່ງມາປະຈຳຢູ່ລັດທີ່ຮັບ ຈາກລັດທີ່ສົ່ງບໍ່ໃຫ້ດຳເນີນວິຊາຊີບຫລືການຄ້າໃດໜຶ່ງ ຢູ່ໃນລັດທີ່ຮັບນອກຈາກໜ້າທີ່ທາງການຂອງຕົນ.

## <u>ມາດຕາ 47</u>

## ວ່າດ້ວຍການປະຕິບັດໜ້າທີ່ ກົງສຸນ ທີ່ສະຖານທູດ

1). ສະຖານທູດຂອງລັດທີ່ສົ່ງປະຈຳຢູ່ ລັດທີ່ຮັບ ສາມາດປະຕິບັດໜ້າທີ່ ກົງສຸນໄດ້. ບັນດາສິດ ແລະ ພັນທະຕ່າງໆຂອງລັດຖະການກົງສຸນ ທີ່ໄດ້ບົ່ງໄວ້ໃນສົນທິສັນຍາ ສະບັບນີ້ ຈະໃຊ້ໄດ້ກັບພະນັກງານການທູດ ຂອງລັດທີ່ສົ່ງ ທີ່ຮັບຜິດຊອບໜ້າທີ່ກົງສຸນ.

2). ສະຖານທູດຂອງລັດທີ່ສົ່ງ ຈະຕ້ອງແຈ້ງໃຫ້ກະຊວງການຕ່າງປະເທດຂອງລັດທີ່ຮັບ ກ່ຽວກັບລາຍຊື່ ແລະ ນາມສະກຸນ ຊັ້ນຕຳແໜ່ງ ຂອງພະນັກງານການທູດທີ່ຮັບຜິດຊອບ ໜ້າທີ່ກົງສຸນ

3). ພະນັກງານການທູດ ທີ່ຮັບຜິດຊອບ ໜ້າທີ່ກົງສຸນຈະສືບຕໍ່ໄດ້ ຮັບສິດ, ຂໍ້ສະດວກ, ອະພິສິດ ແລະ ການຄຸ້ມກັນ ຕາມຖານະການທູດ ຕໍ່ຜູ້ກ່ຽວ.

ພາກທີ່ ຫົກ

ວ່າດ້ວຍຂໍ້ບັນຍັດສຸດທ້າຍ

**ມາດຕາ 48**

ວ່າດ້ວຍການໃຫ້ສັດຕະຍາບັນ, ການບັງຄັບໃຊ້ແລະ ການສິ້ນສຸດ ຜົນບັງຄັບໃຊ້

1). ສົນທິສັນຍາສະບັບນີ້ ຈະຖືກໃຫ້ ສັດຕະຍາບັນ. ການແລກປ່ຽນເອກະສານ ໃຫ້ສັດຕະຍາບັນຈະມີຂຶ້ນທີ່ນະຄອນ..........ວຽງຈັນ.....ສົນທິສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ນັບແຕ່ 30 ວັນ ຫລັງຈາກເວລາ ການແລກປ່ຽນເອກະສານ ໃຫ້ສັດຕະຍາບັນ.

2). ທຸກການປ່ຽນແປງຫລືເພີ່ມເຕີມ ຕໍ່ສົນທິສັນຍາສະບັບນີ້ ຈະຕ້ອງໄດ້ຮັບຄວາມເຫັນດີ ເຫັນພ້ອມ ຈາກຄູ່ເຊັນສັນຍາທັງສອງຝ່າຍ ໂດຍຜ່ານການປຶກສາຫາລືເປັນເອກະພາບກັນ.

3). ສົນທິສັນຍາສະບັບນີ້ຍັງມີຜົນບັງຄັບໃຊ້ຕໍ່ໄປ ຈົນເຖິງການໝົດໄລຍະ 6 ເດືອນ ນັບແຕ່ວັນທີ່ຄູ່ເຊັນສັນຍາ ຝ່າຍໃດຝ່າຍໜຶ່ງ ຫາກແຈ້ງການ ເປັນລາຍລັກອັກສອນ ກ່ຽວກັບຈຸດປະສົງ ຢາກຢຸດຕິສັນຍາຂອງຕົນ ເຖິງອີກຝ່າຍໜຶ່ງ.

ສົນທິສັນຍາສະບັບນີ້ ລົງນາມທີ່ ປັກກິ່ງ

ວັນທີ 8 ເດືອນ ຕຸລາ ປີ 1989

ເປັນສອງຕົ້ນສະບັບ ເປັນ ພາສາຈີນ, ພາສາລາວ . ທັງສອງສະບັບ ມີຄຸນຄ່າເທົ່າທຽມກັນ.

| | |
|---|---|
| ຜູ້ຕາງໜ້າທີ່ມີອໍານາດເຕັມ | ຜູ້ຕາງໜ້າທີ່ມີອໍານາດເຕັມ |
| ແຫ່ງທາສາລະນະລັດ | ແຫ່ງສາທາລະນະລັດ |
| ປະຊາຊົນຈີນ | ປະຊາທິປະໄຕ ປະຊາຊົນລາວ |